# ພາກທີ 5. ການປຶກສາຫາລືແລະເຜີຍແຜ່ຂ່າວສານ

ນະໂຍບາຍຂອງທະນາຄານໂລກແລະ ຄະນະກຳມະການໂລກ ເພື່ອເຂື່ອນ ___ - 232 -

ຜູ້ມີສ່ວນຮ່ວມ ___ 235

ຂະບວນການປຶກສາຫາລື ແລະ ເຜີຍແຜ່ຂ່າວສານ ___ 236

ການເຄື່ອນໄຫວໃນການປຶກສາຫາລືແລະເຂົ້າຮ່ວມ ___ 237

ຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ແຕ່ໄດ້ອອກຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສະບັບປັບປຸງຕົ້ມ ເພື່ອປະເມີນໂຄງການ ___ - 242 -

ການເປີດເຜີຍຂ່າວສານ ___ 252

ເອົາຄຳເຫັນຂອງຜູ້ທີ່ກ່ຽວຂ້ອງເຂົ້າໃນການອອກແບບ ___ 257

ກົນໄກການຈັດຕັ້ງສຳລັບຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ___ 261

ການປຶກສາຫາລືແລະເຜີຍແຜ່ຂ່າວສານ ມີບົດບາດສຳຄັນ ເພື່ອເຮັດໃຫ້ປະຊາຊົນໄດ້ເຂົ້າຮ່ວມໃນການວາງແຜນໂຄງການ. ຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ໄດ້ດຳເນີນມາໂດຍມີຈຸດປະສົງດັ່ງຕໍ່ໄປນີ້:

- ຮັບປະກັນວ່າຄວາມເປັນຫ່ວງເປັນໄຍ, ບົດຮຽນ ແລະຂໍ້ແນະນຳ ຂອງຜູ້ທີ່ມີສ່ວນຮ່ວມກ່ຽວຂ້ອງ ໂດຍສະເພາະ ຈາກຜູ້ທີ່ໄດ້ຮັບຜົນກະທົບໄດ້ເອົາເຂົ້າໃນການອອກແບບ, ວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການ;
- ເພີ່ມທະວີ ຈິດສຳນຶກແລະຄວາມເຂົ້າໃຈຂອງປະຊາຊົນກ່ຽວກັບໂຄງການ ໂດຍສະເພາະກ່ຽວກັບມາດຕະການຫຼຸດຜ່ອນຜົນກະທົບ ເພື່ອເຮັດໃຫ້ຜົນກະທົບຫຼຸດໜ້ອຍລົງ ແລະປັບປຸງຊີວິດການເປັນຢູ່ຂອງຜູ້ທີ່ໄດ້ຮັບຜົນກະທົບ; ແລະ
- ປັບປຸງແຜນພັດທະນາ ຍ້ອນການສະໜັບສະໜູນແລະເຂົ້າຮ່ວມໂດຍກົງ ຂອງຊຸມຊົນແລະຜູ້ທີ່ໄດ້ຮັບຜົນກະທົບ.

ມາຮອດຕົ້ນປີ 2004 ນີ້, ໄດ້ຈັດການບັນຍາຍສະຫຼຸບ ແລະ ກອງປະຊຸມປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ຫຼາຍກວ່າ 250ເທື່ອ ຊຶ່ງຈັດຂຶ້ນໃນທ້ອງຖິ່ນ, ໃນລະດັບພາກ, ລະດັບຊາດ ແລະສາກົນ. ນອກນັ້ນໄດ້ມີການປຶກສາຫາລືນຳກັນກັບກຸ່ມຄົນຕ່າງໆ ທີ່ສົນໃຈແລະຜູ້ທີ່ມີສ່ວນກ່ຽວຂ້ອງຕ່າງໆ ທີ່ພົວພັນໂດຍກົງແລະທາງອ້ອມ ກັບໂຄງການ ແລະກັບຜູ້ທີ່ສົນໃຈຢາກເຂົ້າຮ່ວມ ໃນແຜນງານປຶກສາຫາລືກັບປະຊາຊົນຂອງໂຄງການ.

ຈຸດສຸມຂອງພາກນີ້ ແມ່ນສະເໜີຜົນຂອງການບັນຍາຍສະຫຼຸບ ແລະ ກອງປະຊຸມເຫຼົ່ານີ້ ແລະສະເໜີວ່າໄດ້ເອົາຄຳເຫັນທີ່ໄດ້ມານັ້ນ ເຂົ້າໃນການອອກແບບແນວໃດ. ພາກດັ່ງກ່າວ ໄດ້ເລີ້ມຊອກຮູ້ນະໂຍບາຍຂອງທະນາຄານໂລກ ແລະ ຄະນະກຳມະການໂລກ ເພື່ອເຂື່ອນ ກ່ຽວກັບການປຶກສາຫາລືແລະເຜີຍແຜ່ຂ່າວສານ. ຈາກນັ້ນ ກໍໄດ້ຊອກຮູ້ຜູ້ທີ່ມີສ່ວນກ່ຽວຂ້ອງກັບໂຄງການ ແລະໄດ້ກຳນົດວິທີການ ທີ່ຈະເອົາມາເຮັດ. ພາກຕໍ່ໄປນີ້ ຍັງຈະໄດ້ຍົກໃຫ້ເຫັນວຽກທີ່ໄດ້ເຮັດມາຮອດມື້ນີ້ ແລະລາຍລະອຽດຂອງຄຳເຫັນ

ທີ່ໄດ້ມາຈາກການເຄື່ອນໄຫວເຫຼົ່ານີ້ ແລະການສັງລວມເອົາຄຳເຫັນເຫຼົ່ານີ້ ເຂົ້າໃນການອອກແບບສຸດທ້າຍຂອງໂຄງການ. ພາກນີ້ ຍັງໄດ້ສະເໜີໃຫ້ເຫັນຈະແຈ້ງ ແຜນການປຶກສາຫາລືແລະເຜີຍແຜ່ຂ່າວ ສານເພື່ອໃຫ້ທະນາຄານໂລກ ສາມາດປະເມີນໂຄງການໄດ້ໃນປັດຈຸບັນ ລວມທັງໃນໄລຍະຈັດຕັ້ງປະຕິບັດໂຄງການ.

## ນະໂຍບາຍຂອງທະນາຄານໂລກແລະຄະນະກຳມະການໂລກ ເພື່ອເຂື່ອນ

ນະໂຍບາຍດ້ານສິ່ງແວດລ້ອມສາມຢ່າງຄື: ນະໂຍບາຍ (OP) 4.01. ການປະເມີນຜົນ ສິ່ງແວດລ້ອມ, ນະໂຍບາຍ (OP) 4.12 ການຍົກຍ້າຍຈັດສັນປະຊາຊົນແບບ ບໍ່ສະໝັກໃຈ ແລະ ນະໂຍບາຍ (OD) 4.20 ຄົນພື້ນເມືອງ ໄດ້ຮຽກຮ້ອງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ມີສ່ວນຮ່ວມແລະເຂົ້າຮ່ວມ ລວມທັງຜູ້ທີ່ໄດ້ຮັບຜົນກະທົບ ແລະ ອົງການບໍ່ສັງກັດລັດ ໃນການວາງແຜນຈັດຕັ້ງປະຕິບັດໂຄງການ. ທະນາຄານໂລກ ຕ້ອງການໃຫ້ມີຍຸດທະສາດທີ່ເໝາະສົມທາງດ້ານວັດທະນະທຳ ເພື່ອໃຫ້ຄົນພື້ນເມືອງໄດ້ເຂົ້າຮ່ວມ ແລະນຳໃຊ້ວິທີທີ່ເໝາະສົມ ເພື່ອດຳເນີນການປຶກສາຫາລື ຊຶ່ງຈະໄດ້ຮັບຜົນປະໂຫຍດຈາກຄວາມຮູ້ພື້ນເມືອງ. ການປຶກສາຫາລືແລະເຜີຍແຜ່ຂ່າວສານທີ່ກຳລັງຢູ່ນັ້ນ ຍັງຈະຕ້ອງໄດ້ເຮັດອີກໃນໄລຍະກໍ່ສ້າງ ແລະດຳເນີນໂຄງການ.

ຂະບວນການປຶກສາຫາລື ແລະ ເຜີຍແຜ່ຂ່າວສານ ຍັງຕ້ອງໄດ້ເອົາໃຈໃສ່ ນຳຂໍ້ບັງຄັບທີ່ໄດ້ກຳນົດ ໃນບົດລາຍງານຂອງຄະນະກຳມະການໂລກເພື່ອເຂື່ອນ ຊຶ່ງໄດ້ສະຫຼຸບດັ່ງລຸ່ມນີ້:

- ການເຂົ້າຮ່ວມ ຂອງຄົນພື້ນເມືອງແລະບັນດາເຜົ່າໃນການປຶກສາຫາລືແລະຂະບວນການສື່ສານນຳກັນແລະເຈລະຈາກັນ, ປັບປຸງການວາງແຜນ ແລະວົງຈອນຂອງໂຄງການ;
- ການເຂົ້າຮ່ວມທີ່ມີປະສິດທິຜົນ ຕ້ອງມີການຄັດເລືອກທີ່ເໝາະສົມ ເພື່ອເອົາຕົວແທນຂອງຊຸມຊົນ;
- ຄວາມພະຍາຍາມຊອກເອົາຄຳຄິດຄຳເຫັນຂອງຄົນພື້ນເມືອງແລະບັນດາເຜົ່າ ກ່ອນຈະເອົາຈຸດສຳຄັນເຂົ້າໃນຂະບວນການຕົກລົງ;
- ວິທີການສະແດງ ຄວາມເຫັນດີນຳ ຄວນເຮັດຕາມຮີດຄອງປະເພນີ ແລະຕາມກົດໝາຍແຫ່ງຊາດ;
- ໃນໄລຍະເລີ້ມຂະບວນການ, ຜູ້ທີ່ໄດ້ຮັບຜົນກະທົບ ຄວນບອກວ່າເຂົາເຈົ້າຈະສະເໜີແນວໃດຄຳເຫັນຂອງເຂົາເຈົ້າກ່ຽວກັບການຕົກລົງທີ່ສຳຄັນ;
- ຕ້ອງຮັບປະກັນຄວາມສົມບູນ ຂອງຂະບວນການຂອງຊຸມຊົນ;
- ຊຸມຊົນ ບໍ່ຄວນໃຫ້ແຍກອອກຈາກກັນ ແລະປະສົມກັນຕື່ມ ແລະຄວນເປັນອິດສະລະໃນການດຳເນີນວຽກງານ;
- ຄວນຕົກລົງກົນໄກແກ້ໄຂຂໍ້ຂັດແຍ່ງແບບເອກກະລາດ ກັບຜູ້ທີ່ມີສ່ວນຮ່ວມໃນໄລຍະເລີ້ມຕົ້ນຂອງຂະບວນການໃດໜຶ່ງ.

ຕາຕະລາງ 5.1. ຜູ້ມີສ່ວນກ່ຽວຂ້ອງກັບໂຄງການ

| ທ້ອງຖິ່ນ | ພາກ | ຊາດ | ສາກົນ |
|---|---|---|---|
| ແຕ່ລະຄອບຄົວໃນບ້ານຕ່າງໆ ຢູ່ພູພຽງນາກາຍ | ຜູ້ນຳຊຸມຊົນ | ກະຊວງຕ່າງໆ | ໂຮງງານພະລັງງານ |
| ຊຸມຊົນທີ່ຢູ່ເຂດລຸ່ມ | ເມືອງທີ່ກ່ຽວຂ້ອງ | ຄົນລາວ | ລັດຖະບານໄທ |
| ຊຸມຊົນທີ່ຢູ່ໃນດິນຂອງໂຄງການ | ອົງການຕ່າງໆຂອງ ແຂວງ | ອົງການບໍ່ສັງກັດ ລັດ ລະດັບຊາດ | ສະຖານທູດ |
| ຊຸມຊົນທີ່ຢູ່ໃນປ່າສະຫງວນນາກາຍນ້ຳເທີນແລະເຂດແລວທາງທ່ຽວຂອງສັດປ່າ | ທຸລະກິດແລະຜູ້ຮັບເໝົາ | ສື່ໃນຊາດ | ສະຖາບັນການເງິນສາກົນ |
| | | | ຜູ້ສ້າງທຶນແລະສະຖາບັນການເງິນ ແກ່ບໍລິສັດໄຟຟ້ານ້ຳເທີນ 2 |
| | | | ອົງການບໍ່ສັງກັດລັດສາກົນ |
| | | | ສື່ມວນຊົນສາກົນ |
| | | | ຜູ້ພັດທະນາເຂື່ອນໄຟຟ້າ |

ຕາຕະລາງ 5.2. ຜູ້ມີສ່ວນກ່ຽວຂ້ອງ, ຄວາມສົນໃຈແລະການເຂົ້າຮ່ວມໃນຂະບວນການປຶກສາຫາລື ແລະ ເຜີຍແຜ່ຂ່າວສານ (ແຫຼ່ງຂ່າວ, ແຜນພັດທະນາສັງຄົມ, ເດືອນເມສາ 2004)

| ຜູ້ມີສ່ວນກ່ຽວຂ້ອງ | ຜົນໄດ້ແລະບົດຮຽນ | ຂະບວນການປຶກສາຫາລື ມາເຖິງປັດຈຸບັນ |
|---|---|---|
| ປະຊາຊົນຢູ່ ພູພຽງນາກາຍ ທີ່ຈະໄດ້ຖືກຍົກຍ້າຍຫຼືບໍ່ກໍໄດ້ຮັບຜົນສະທ້ອນປະມານ 1.200 ຄອບຄົວ | ຜົນໄດ້ທາງບວກຈາກການຍົກຍ້າຍຈັດສັນປະຊາຊົນແລະແຜນປັບປຸງຊີວິດການເປັນຢູ່. ໃນໝໍ່ໆມານີ້ແມ່ນໄດ້ມີຟາມທົດລອງແລະການຍ້າຍບ້ານຕົວຢ່າງ | ປຶກສາຫາລືເບື້ອງຕົ້ນໃນປີ 1995.<br>ປຶກສາຫາລືຫຼາຍໃນປີ 1997-99 ໃນທຸກບ້ານ.<br>ປຶກສາຫາລືກ່ຽວກັບບ້ານທົດລອງແຕ່ປີ 2001.<br>ສ້າງຕັ້ງສູນຂ່າວສານຂຶ້ນກັບໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນແລະໜ່ວຍປະຕິບັດງານການຍົກຍ້າຍຈັດສັນປະຊາຊົນຂອງເມືອງທີ່ນາກາຍ.<br>ຄະນະກຳມະການຍົກຍ້າຍຈັດສັນປະຊາຊົນບ້ານຈັດຕັ້ງຂຶ້ນ. |
| ປະຊາຊົນທີ່ຢູ່ຕາມຄອງລຸ່ມປະມານ 198ຄອບຄົວ | ຜົນໄດ້ຍ້ອນທ່າແຮງທາງດ້ານຊົນລະປະທານແຕ່ກໍສົນໃຈກ່ຽວກັບຜົນກະທົບຈາກນ້ຳຖ້ວມແລະການທຳມາຫາກິນ | ປຶກສາຫາລືກ່ຽວກັບຜົນກະທົບ ໃນປີ 1997.<br>ປຶກສາຫາລືລະອຽດຕື່ມກ່ຽວກັບແຜນຫຼຸດຜ່ອນຜົນກະທົບແລະທາງເລືອກໃນການຊົດເຊີຍ ທີ່ບໍລິສັດໄຟຟ້ານ້ຳເທີນ 2 ແລະ ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນຈະໄດ້ດຳເນີນໃນປີ 2004. |
| ປະຊາຊົນຢູ່ຕາມແລວສາຍສົ່ງ | ສົນໃຈຢາກໃຫ້ມີການຊົດເຊີຍຄ່າເສຍຫາຍຢ່າງເປັນທຳແລະທັນທີ | ປຶກສາຫາລືກ່ຽວກັບຜົນກະທົບ ໃນປີ 1997.<br>ປຶກສາຫາລືລະອຽດຕື່ມກ່ຽວກັບແຜນຫຼຸດຜ່ອນຜົນກະທົບທີ່ບໍລິສັດໄຟຟ້ານ້ຳເທີນ 2 ແລະ ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ ຈະໄດ້ດຳເນີນໃນປີ 2004. |
| ປະຊາຊົນທີ່ມີຊັບສິນຢູ່ໃນທີ່ດິນກໍ່ສ້າງໂຄງການ | ຍັງບໍ່ທັນມີການປຶກສາຫາລືໃນລາຍລະອຽດກ່ຽວກັບຜົນກະທົບຂອງໂຄງການ | ກຳລັງອອກແບບລະອຽດແລະຊອກເບິ່ງຜົນກະທົບ.<br>ຂະບວນການປຶກສາຫາລື ທີ່ໄດ້ວາງແຜນມາຈະເລີ້ມ ໃນປີ 2004 ແຕ່ໄດ້ຂ່າວສານຈາກ ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນແລ້ວ. |
| ປະຊາຊົນທີ່ຢູ່ຕາມເຊບັ້ງໄຟ | ຜົນໄດ້ຍ້ອນທ່າແຮງທາງດ້ານຊົນລະປະທານແຕ່ກໍສົນໃຈກ່ຽວກັບຜົນກະທົບຈາກນ້ຳຖ້ວມແລະການທຳມາຫາກິນ | ປຶກສາຫາລືກ່ຽວກັບຜົນກະທົບ ໃນປີ 1997.<br>ປຶກສາຫາລືລະອຽດຕື່ມກ່ຽວກັບແຜນຫຼຸດຜ່ອນຜົນກະທົບທີ່ບໍລິສັດໄຟຟ້ານ້ຳເທີນ 2 ແລະ ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ ຈະໄດ້ດຳເນີນໃນປີ 2004 ແລະຫຼັງຈາກນັ້ນ. |
| ອຳນາດການປົກຄອງທ້ອງຖິ່ນ | ຕາງໜ້າເຂົ້າຮ່ວມໃນຂະບວນການຕິກລົງແລະການຝຶກອົບຮົມ | ກອງປະຊຸມແລະປຶກສາຫາລື ທີ່ດຳເນີນມາແຕ່ປີ 1997, ປະເມີນຄວາມສາມາດ ແລະຈັດເຂົ້າໃນໜ່ວຍງານສຳຄັນຕ່າງໆ ເຊັ່ນໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ ແລະໜ່ວຍປະຕິບັດງານການຍົກຍ້າຍຈັດສັນປະຊາຊົນຂອງເມືອງ |

| | | |
|---|---|---|
| ອົງການຕ່າງໆຂອງແຂວງ | ຕາງໜ້າເຂົ້າຮ່ວມໃນຂະບວນການຕົກລົງແລະການຝຶກອົບຮົມ | ກອງປະຊຸມແລະປຶກສາຫາລື ທີ່ດຳເນີນມາແຕ່ປີ 1997, ຈັດເຂົ້າໃນຄະນະກຳມະການຍົກຍ້າຍຈັດສັນປະຊາຊົນ. |
| ລັດຖະບານ (ກະຊວງ ແລະ ອວຕສ) | ລະບົບກົດໝາຍແລະການຈັດຕັ້ງ, ຄວາມເໝາະສົມຂອງທຶນຮອນ ແລະຕາງໜ້າເຂົ້າຮ່ວມໃນຂະບວນການຕົກລົງ | ກອງປະຊຸມແລະປຶກສາຫາລື ທີ່ດຳເນີນມາແຕ່ປີ 1995, ຈັດເຂົ້າໃນຄະນະກຳມະການຍົກຍ້າຍຈັດສັນປະຊາຊົນ, ອວຕສ ເປັນພາກສ່ວນໜຶ່ງຮັບຜິດຊອບການປຶກສາຫາລືໃນລະດັບຊາດ |
| ອົງການມະຫາຊົນ (ສະຫະພັນແມ່ຍິງ, ແນວລາວສ້າງຊາດ) | ຕາງໜ້າເຂົ້າຮ່ວມໃນຂະບວນການຕົກລົງແລະການຝຶກອົບຮົມ | ກອງປະຊຸມແລະປຶກສາຫາລື ທີ່ດຳເນີນມາແຕ່ປີ 1997, ຈັດເຂົ້າໃນໜ່ວຍງານສຳຄັນຕ່າງໆ ເຊັ່ນໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ, ໜ່ວຍປະຕິບັດງານການຍົກຍ້າຍຈັດສັນປະຊາຊົນຂອງເມືອງ ແລະຄະນະກຳມະການຍົກຍ້າຍຈັດສັນປະຊາຊົນຂອງບ້ານ, |
| ອົງການບໍ່ສັງກັດລັດ | ມາດຕະຖານສາກົນກ່ຽວກັບເລື້ອງສິ່ງແວດລ້ອມແລະສັງຄົມ ແລະຄວາມເໝາະສົມຂອງໂຄງການ | ເຂົ້າຮ່ວມ ໃນກອງປະຊຸມປຶກສາຫາລືລະດັບທ້ອງຖິ່ນແລະລະດັບຊາດຈຳນວນໜຶ່ງ, ທົບທວນເອກກະສານແລະໄປຢ້ຽມຢາມສະຖານທີ່, ລວມທັງໃນປີ 2003 |
| ຜູ້ຊ່ຽວຊານກັ່ນກອງ | ມາດຕະຖານສາກົນກ່ຽວກັບເລື້ອງສິ່ງແວດລ້ອມແລະສັງຄົມ ແລະຄວາມເໝາະສົມຂອງໂຄງການ | ຜູ້ຊ່ຽວຊານກັ່ນກອງ ໄດ້ດຳເນີນການຢ້ຽມຢາມເຂດໂຄງການແລະປຶກສາຫາລືມາແຕ່ 1996 ແລະໄດ້ທົບທວນບາງເອກກະສານທີ່ກ່ຽວຂ້ອງ. |
| ຜູ້ໃຫ້ທຶນແລະສະຖາບັນການເງິນ | ມາດຕະຖານສາກົນກ່ຽວກັບເລື້ອງສິ່ງແວດລ້ອມແລະສັງຄົມ ແລະຄວາມເໝາະສົມຂອງໂຄງການ | ເຂົ້າຮ່ວມ ໃນກອງປະຊຸມປຶກສາຫາລືລະດັບ ຊາດທັງໝົດ, ທົບທວນເອກກະສານແລະໄປຢ້ຽມຢາມສະຖານທີ່ ມາແຕ່ປີ 1995 |
| ສະຖານທູດ | ມາດຕະຖານສາກົນກ່ຽວກັບເລື້ອງສິ່ງແວດລ້ອມແລະສັງຄົມ ແລະຄວາມເໝາະສົມຂອງໂຄງການ | ເຂົ້າຮ່ວມ ໃນກອງປະຊຸມປຶກສາຫາລືລະດັບ ຊາດທັງໝົດ, ທົບທວນເອກກະສານແລະໄປຢ້ຽມຢາມສະຖານທີ່ ມາແຕ່ປີ 1995 |
| ຜູ້ມີສ່ວນກ່ຽວຂ້ອງຂອງໄທ (ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ, ພາກສ່ວນເອກກະຊົນແລະລັດ) | ມາດຕະຖານສາກົນກ່ຽວກັບເລື້ອງສິ່ງແວດລ້ອມແລະສັງຄົມ ແລະການລົງທຶນ | ເຂົ້າຮ່ວມໃນການເຈລະຈາສັນຍາຊື້ຂາຍໄຟຟ້າ |

## ຜູ້ມີສ່ວນຮ່ວມ

ຜູ້ມີສ່ວນຮ່ວມ 5 ກຸ່ມ ແມ່ນມີດັ່ງນີ້:

- ປະຊາຊົນ ທີ່ໄດ້ຮັບຜົນກະທົບ ຈາກໂຄງການ.
- ພະນັກງານລັດ ໃນລະດັບເມືອງ, ແຂວງ ແລະ ສູນກາງ.
- ຊຸມຊົນອື່ນໆ ທີ່ມີຄວາມສົນໃຈ.
- ອົງການບໍ່ສັງກັດລັດ ທີ່ເຄື່ອນໄຫວ ຢູ່ ສປປ ລາວ ແລະ ໂດຍສະເພາະ ໃນເຂດໂຄງການ.
- ອົງການບໍ່ສັງກັດລັດ ແລະ ອົງການສາກົນ ແລະ ກຸ່ມອື່ນໆ ທີ່ມີຄວາມສົນໃຈ.

ບຸກຄົນ, ຊຸມຊົນ, ອົງການລັດແລະອົງການບໍ່ສັງກັດລັດແລະອົງການອື່ນໆ ແມ່ນມີໃນລາຍລະອຽດ

ໃນຕາຕະລາງ 5.1., ພ້ອງທັງມີຄວາມສົນໃຈແລະຕ້ອງການຂອງເຂົາເຈົ້າກ່ຽວກັບການເຜີຍແຜ່ຂ່າວສານ ຊຶ່ງມີໃນຕາຕະລາງ 5.2.

## ຂະບວນການປຶກສາຫາລື ແລະ ເຜີຍແຜ່ຂ່າວສານ

### ຂະບວນການທີ່ມີສາມໄລຍະ

ການປຶກສາຫາລື ໃນລະດັບຕ່າງໆທ້ອງຖິ່ນ, ເຂດ, ຊາດແລະສາກົນ ແມ່ນໄດ້ເຮັດກັນມາແລະຈະສືບຕໍ່ເຮັດ ຕາມຂະບວນການທີ່ມີສາມໄລຍະ.

#### ໄລຍະ 1: ເກັບກຳ ແລະ ເຜີຍແຜ່ຂ່າວສານ

ໄລຍະຕົ້ນຂອງປຶກສາຫາລື ແນໃສ່ເກັບກຳແລະເຜີຍແຜ່ຂ່າວສານ. ຂໍ້ມູນແມ່ນໄດ້ເກັບມາ ກ່ຽວກັບລັກສະນະຕ່າງໆຂອງຄົນ ແລະ ລັກສະນະກາຍະພາບຂອງສິ່ງແວດລ້ອມ ເພື່ອຄາດຄະເນຜົນກະທົບຂອງໂຄງການ. ໃນໄລຍະນີ້, ຂ່າວສານກໍໄດ້ເອົາໄປເຜີຍແຜ່ໃຫ້ຜູ້ກ່ຽວຂ້ອງ ທີ່ອະທິບາຍລະອຽດ ຮູບແບບຂອງໂຄງ ການແລະຜົນສະທ້ອນຂອງມັນ ຕໍ່ການປ່ຽນແປງສິ່ງແວດລ້ອມ ທາງດ້ານສັງຄົມ ແລະກາຍະພາບ.

#### ໄລຍະ 2: ສະເໜີ ຄວາມສົນໃຈຂອງຜູ້ກ່ຽວຂ້ອງ

ຄຳເຫັນຕ່າງໆ ໄດ້ຮັບມາຈາກຜູ້ກ່ຽວຂ້ອງຕ່າງໆ ແລະຍັງສືບຕໍ່ຮັບອີກຢູ່ ເພື່ອຕອບກັບຂ່າວສານ ທີ່ໄດ້ເກັບມາໃນໄລຍະ 1. ຂ່າວສານ ແມ່ນໄດ້ເອົາໄປເຜີຍແຜ່ ແລະໄດ້ຊຸກຍູ້ສົ່ງເສີມ ໃຫ້ມີ ແລະ ສືບຕໍ່ມີການປຶກສາຫາລື ກ່ຽວກັບທາງເລືອກ ແລະ ມາດຕະການຫຼຸດຜ່ອນຜົນກະທົບ ທີ່ສະເໜີມາ. ບັນຫາທີ່ຜູ້ກ່ຽວຂ້ອງ ອາດເບິ່ງຂ້າມໃນເມື່ອກ່ອນ ຫຼືກັບບັນຫາເດັ່ນ ກໍໄດ້ຈັດເປັນເວທີ ເພື່ອທົບທວນດ້ວຍການປຶກສາຫາລື ກັບປະຊາຊົນ.

#### ໄລຍະ 3: ການເຂົ້າຮ່ວມ ຢ່າງຫ້າວຫັນ ໃນການອອກແບບ ແລະຈັດຕັ້ງປະຕິບັດໂຄງການ.

ອີງໃສ່ການປຶກສາຫາລື ໃນໄລຍະ 2, ກໍໄດ້ວາງມາດຕະການຫຼຸດຜ່ອນ ເພື່ອແກ້ໄຂຜົນກະທົບຈາກໂຄງການ. ຂະບວນການ ຈະສືບຕໍ່ ໃນໄລຍະຈັດຕັ້ງປະຕິບັດໂຄງການ. ຂະບວນການດັ່ງກ່າວແມ່ນເພື່ອເອົາ ຄຳເຫັນໃນແຕ່ລະຮອບ ເພື່ອເບິ່ງວ່າບໍ່ມີຫຍັງຂາດຕົກບົກຜ່ອງບໍ ໃນແຕ່ລະໄລຍະ ທັງກ່ອນແລະຫຼັງຈັດຕັ້ງປະຕິບັດໂຄງການ..

### ວິທີວິທະຍາ

ເຕັກນິກການພົວພັນແລະແລກປ່ຽນ ຂ່າວສານ ກໍໄດ້ສ້າງຂຶ້ນ ສຳລັບຜູ້ມີສ່ວນຮ່ວມກຸ່ມຕ່າງໆ ເພື່ອຮັບປະກັນ ໃຫ້ມີການເຂົ້າໃຈຊຶ່ງກັນແລະກັນຫຼາຍຂຶ້ນ.

### ວິທີການ

ຕະຫຼອດຂະບວນການປຶກສາຫາລື ແລະເຜີຍແຜ່ຂ່າວສານ ມັນມີຄວາມສຳຄັນທີ່ຈະຄຳນຶງເຖິງ:

- ໂຄງລ່າງຂອງອຳນາດ ແລະສິດໃນທ້ອງຖິ່ນ ແລະຄວາມຈຳເປັນ ເພື່ອຮັບປະກັນ ການເຂົ້າຮ່ວມໃນ ວຽກປຶກສາຫາລື ຍັງບໍ່ມີອຳນາດການປົກຄອງທ້ອງຖິ່ນ ຄອບຄອງຫຼາຍ;
- ຄວາມຈຳເປັນພິເສດ ຂອງກຸ່ມແມ່ຍິງ ແລະກຸ່ມທີ່ປ່ຽນແປງງ່າຍ; ແລະ
- ການສ້າງ ເປັນເອກກະສານກ່ຽວກັບຂະບວນການສື່ສານ ແບບສອງທາງ ແລະການປຶກສາຫາລື ນຳກັນ.

### ເຕັກນິກທີ່ເໝາະສົມ

ເຕັກນິກ ເພື່ອປຶກສາຫາລື ກັບປະຊາຊົນໄດ້ສ້າງຂຶ້ນ ເພື່ອໃຫ້ສອດຄ່ອງກັບຄວາມຈຳເປັນຂອງແຕ່ລະກຸ່ມເປົ້າໝາຍ ໂດຍຄຳນຶງເຖິງຄວາມຫຼາກຫຼາຍແລະຈຳນວນຜູ້ເຂົ້າຮ່ວມ. ມັນໄດ້ມີດັ່ງນີ້:

- ນຳໃຊ້ສິ່ງປະຈັກຕາ ເຊັ່ນ ຮູບ, ຮູບແຕ້ມແລະປິດສະເຕີ ໂດຍສະເພາະໃນລະດັບທ້ອງຖິ່ນແລະເຂດ;
- ປຶກສາຫາລືກັນຊຶ່ງໜ້າ ໃນບ່ອນທີ່ອ່ານອອກຂຽນໄດ້ຕ່ຳ. ອັນນີ້ ຍັງລວມເອົາ ກອງປະຊຸມສຳມະນາ ແລະ ກອງປະຊຸມວິຊາການ, ກອງປະຊຸມພົບປະກັບ ໄທບ້ານແບບລວມໆ, ການສຳພາດທີ່ມີການຈັດຕັ້ງ, ກອງປະຊຸມເປັນກຸ່ມນ້ອຍ, ການສ້າງຕົວແບບ, ເຕັກນິກການປະເມີນຜົນແບບເລັ່ງລັດ ແລະການຢ້ຽມຢາມສະຖານທີ່;
- ແປເອກກະສານ ແລະບົດສະຫຼຸບຂອງໂຄງການເປັນພາສາລາວ ຊຶ່ງມີຄວາມສຳຄັນສຳລັບຜູ້ນຳ, ພະນັກງານໃນທ້ອງຖິ່ນ ແລະຜູ້ກ່ຽວຂ້ອງອື່ນໆໃນລະດັບຊາດ;
- ນຳໃຊ້ ສູນຂ່າວສານ ຂອງໂຄງການ ທີ່ວຽງຈັນ, ທ່າແຂກແລະນາກາຍ. ຊຶ່ງໄດ້ສະໜອງເອກກະສານແລະຂ່າວສານກ່ຽວກັບສະພາບ ຂອງໂຄງການ, ແກ້ຄຳຖາມ, ຂໍ້ສະເໜີເພື່ອມີຂ່າວສານເພີ້ມ ແລະ ດຳເນີນກອງປະຊຸມຂອງຜູ້ຕາງໜ້າບ້ານແລະເມືອງ ເປັນໄລຍະ;
- ການພົວພັນໂດຍກົງຜ່ານສື່ມວນຊົນ ທັງເປັນບົດພິມແລະເອເລັກທະໂລນິກ, ການລາຍງານສະຫຼຸບ ໃຫ້ບຸກຄົນຫຼືກຸ່ມຄົນ, ການສຳພາດ ໂທລະພາບແລະວິທະຍຸ, ການແຈກຂ່າວສານລະອຽດຂອງໂຄງການ, ການຈັດກອງປະຊຸມຊົມໂປຊຽມແລະຟໍຣອມ ແລະ ການລົງໄປພາກສະໜາມຕົວຈິງ ສຳລັບຜູ້ກ່ຽວຂ້ອງທີ່ມາຈາກສາກົນ.

ຕາຕະລາງ 5.3 ໄດ້ສະເໜີເຄື່ອງມືທີ່ນຳໃຊ້ເພື່ອເຜີຍແຜ່ຂ່າວສານໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃນແຕ່ລະກຸ່ມ

### ບັນຫາພາສາ

ຂ່າວສານທີ່ເກັບກຳມາໄດ້ ກ່ຽວກັບການນຳໃຊ້ພາສາ ໄດ້ຢັ້ງຢືນວ່າຄົນສ່ວນຫຼາຍໃນເຜົ່າຕ່າງໆທີ່ຢູ່ໃນເຂດໂຄງການ ສາມາດເວົ້າພາສາລາວໄດ້ ແລະພາສາຊົນເຜົ່າ ແມ່ນໃຊ້ແຕ່ກັບຊີວິດປະຈຳວັນ ໃນທ້ອງຖິ່ນນັ້ນ. ມີແຕ່ຜູ້ທີ່ໄດ້ຮັບຜົນກະທົບ ຈຳນວນໜ້ອຍ ທີ່ສາມາດເຂົ້າໃຈພາສາລາວໄດ້ດີ. ນອກນີ້ບໍ່ມີພາສາຂອງເຜົ່າໃດມີຕົວໜັງສື. ດັ່ງນັ້ນ, ມັນກໍຍາກ ທີ່ຈະຈັດເປັນເອກກະສານຂຽນໃນແຕ່ລະພາສາໄດ້ ເພື່ອເອົາມາໃຊ້ໃນການປຶກສາຫາລື.

ການແປບົດສະເໜີເປັນພາສາເຜົ່າ ຈະແມ່ນບະຣູກໍຄືທວງຄຶກ, ກໍອາດເປັນທາງເລືອກອັນໜຶ່ງ ແລະໃນໄລຍະມີການປຶກສາຫາລື ການແປດັ່ງກ່າວກໍໄດ້ຈັດໃຫ້ໃນເມື່ອຜູ້ນຳຂອງບ້ານ ຫຼືພະນັກງານຊົນເຜົ່າ ໃນໜ່ວຍງານຂອງເມືອງ ຫາກເຫັນວ່າມີຄວາມຈຳເປັນ. ກ່ອນຈະມີການປຶກສາຫາລື ກໍໄດ້ມີການທົດສອບພາສາກັນກ່ອນ ໂດຍສະເພາະແມ່ຍິງແລະຜູ້ເຖົ້າທີ່ອາດບໍ່ເຄີຍສຳພັດກັບພາສາລັດຖະການຫຼາຍ.

### ຄວາມສະເໝີພາບຍິງຊາຍ

ການເຂົ້າຮ່ວມຂອງແມ່ຍິງ ໃນການປຶກສາຫາລື ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພາະວ່າແມ່ຍິງສ່ວນຫຼາຍໄດ້ຮັບການສຶກສາຕ່ຳກວ່າຜູ້ຊາຍ ຫຼືສຳພັດກັບໂລກພາຍນອກແລະການເມືອງ ໜ້ອຍແດ່. ໃນການປຶກສາຫາລື, ຄວນພະຍາຍາມ ໃຫ້ແມ່ຍິງມີສ່ວນຮ່ວມແລະຊຸກຍູ້ໃຫ້ເຂົາເຈົ້າເຂົ້າຮ່ວມ ໂດຍຈັດເປັນໜ່ວຍແມ່ຍິງຕ່າງຫາກ. ອັນນີ້ກໍສາມາດເຮັດໄດ້ຕາມບົດບາດລວມທົ່ວໄປ ຂອງສະຫະພັນແມ່ຍິງໃນການປຶກສາຫາລືໃນລະດັບທ້ອງຖິ່ນ.

## *ການເຄື່ອນໄຫວ ໃນການປຶກສາຫາລືແລະເຂົ້າຮ່ວມ*

ເຫດການກ່ຽວກັບຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ໄດ້ດຳເນີນມາໃນທ້ອງຖິ່ນ, ໃນລະດັບພາກ, ລະດັບຊາດ ແລະສາກົນ. ບົດສະຫຼຸບການເຄື່ອນໄຫວ ມາຮອດເດືອນ 10/2004 ແມ່ນມີໃນເອກກະສານຊ້ອນທ້າຍ N.

## ການພົວພັນກັບສື່ມວນຊົນ

ເພື່ອສ້າງຈິດສຳນຶກກ່ຽວກັບໂຄງການຢ່າງກວ້າງຂວາງ, ບໍລິສັດໄຟຟ້ານ້ຳເທີນ 2 ໄດ້ສົ່ງເສີມການມີສ່ວນຮ່ວມຂອງສື່ມວນຊົນຕ່າງໆ ແລະກຸ່ມອື່ນໆ ໃນຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ (ຕາຕະລາງ 5.4).

## ສະຫຼຸບການເຄື່ອນໄຫວກ່ຽວກັບການປຶກສາຫາລືແລະເຜີຍແຜ່ຂ່າວສານ ແຕ່ເດືອນ 7/02-3/04

ເພື່ອຮັບເອົາການສະໜັບສະໜູນຈາກມວນຊົນໃນການຈັດຕັ້ງປະຕິບັດໂຄງການ, ລັດຖະບານ ສປປລາວ ແລະບໍລິສັດໄຟຟ້ານ້ຳເທີນ 2 ໄດ້ສຸມໃສ່ສາມກຸ່ມ: (i) ນັກການທູດ/ກຸ່ມຜູ້ໃຫ້ທຶນ; (ii) ອົງການບໍ່ສັງກັດລັດ /ອົງການສັງຄົມ /ສະຖາບັນການສຶກສາ; ແລະ (iii) ສື່ມວນຊົນ. ຄວາມພະຍາຍາມໃນການສື່ສານແມ່ນໄດ້ດຳເນີນຕາມການເຄື່ອນໄຫວດັ່ງຕໍ່ໄປນີ້:

### ງານຊຸມໂປຊຽມ "ນ້ຳເທີນ 2 ປະຕູສູ່ອະນາຄົດ"

ເຫດການດັ່ງກ່າວເປີດຂຶ້ນ ພາຍໃຕ້ການເປັນປະທານຂອງລັດຖະບານ ແລະໄດ້ເຕົ້າໂຮມເອົາຄົນຫຼາຍກວ່າ 150 ຄົນ ລວມທັງລັດຖະມົນຕີ, ບັນດາທູຕານຸທູດ, ຜູ້ຕາງໜ້າຂອງກຸ່ມຜູ້ໃຫ້ທຶນແລະອົງການບໍ່ສັງກັດລັດ, ສະມາຊິກຂອງກຸ່ມທີ່ປຶກສາສາກົນຂອງທະນາຄານໂລກ ແລະ ຄະນະຊ່ຽວຊານກັ່ນກອງດ້ານສິ່ງແວດລ້ອມແລະສັງຄົມ ຂອງລັດຖະບານ ສປປລາວ, ສື່ມວນຊົນ ທັງພາຍໃນແລະຕ່າງປະເທດ, ລວມທັງຜູ້ຕາງໜ້າແຂວງແລະບ້ານ ທີ່ພົວພັນໂດຍກົງກັບໂຄງການ. ງານດັ່ງກ່າວ ໄດ້ຍົກໃຫ້ເຫັນການຕັດສິນໃຈຂອງລັດຖະບານ ສປປລາວ ທີ່ຢາກຈັດຕັ້ງປະຕິບັດໂຄງການ ໃຫ້ໄດ້ຕາມມາດຕະຖານສາກົນໂດຍສະເພາະ ທາງດ້ານສັງຄົມແລະສິ່ງແວດລ້ອມ. ດັ່ງນັ້ນ, ການຖົກຖຽງກັນໃນງານດັ່ງກ່າວ ສຸມໃສ່ສາມບັນຫາສຳຄັນ: (i) ກອບການພັດທະນາແຫ່ງຊາດແລະຄວາມສຳຄັນດ້ານຍຸດທະສາດຂອງໂຄງການນ້ຳເທີນ 2, (ii) ບັນຫາການປົກປັກຮັກສາສິ່ງແວດລ້ອມແລະສັງຄົມ, ແລະ (iii) ການຮັກສາຜົນປະໂຫຍດຂອງ ສປປລາວ.

### ການຢ້ຽມຢາມເຂດໂຄງການ

ໃນທ້າຍປີ 2002, ລັດຖະບານ ສປປລາວ ໄດ້ຈັດຕັ້ງ ໃຫ້ບັນດາເອກອັກຄະລັດຖະທູດແລະຜູ້ຕາງໜ້າອົງການຈັດຕັ້ງສາກົນຢູ່ທີ່ວຽງຈັນ ລົງໄປຢ້ຽມຢາມເຂດໂຄງການ, ຊຶ່ງມີທ່ານສູລີວົງດາຣາວົງ, ອະດີດລັດຖະມົນຕີກະຊວງອຸດສາຫະກຳແລະຫັດຖະກຳ ນຳພາ.

ການໄປຢ້ຽມຢາມເຂດໂຄງການຂອງສື່ມວນຊົນ ສາກົນແລະພາຍໃນ ກໍໄດ້ຈັດຂຶ້ນ ໃນເດືອນ 11/2002 ໂດຍມີນັກຂ່າວແລະນັກຖ່າຍຮູບ 15 ຄົນ ລວມທັງອົງການຂ່າວສາກົນໃຫຍ່ໆ, ອົງການໜັງສືພິມໄທແລະວິທະຍຸເອເຊຍເສລີ. ການຢ້ຽມຢາມດັ່ງກ່າວ ໄດ້ເຮັດໃຫ້ມີການຜະລິດບົດລາຍງານຂ່າວອັນຍືດຍາວ ກ່ຽວກັບໂຄງການອອກຕະຫຼອດປີ 2003.

ການໄປຢ້ຽມຢາມເຂດໂຄງການ ຂອງອົງການບໍ່ສັງກັດລັດ ກໍໄດ້ຈັດຂຶ້ນລະຫວ່າງເດືອນ 2 ຫາເດືອນ 3/03 ເພື່ອໃຫ້ອົງການເຫຼົ່ານີ້ ປະເມີນສະພາບສິ່ງແວດລ້ອມແລະສັງຄົມທີ່ມີຢູ່ ແລະ ການທ້າທາຍຕ່າງໆ. ລັດຖະບານ ສປປລາວ ໄດ້ເຊີນ 80 ອົງການບໍ່ສັງກັດລັດ ແຕ່ກໍມີແຕ່ 20 ອົງການທີ່ຕອບຮັບ ແລະ 16 ອົງການເທົ່ານັ້ນ ທີ່ສາມາດເຂົ້າຮ່ວມໃນການໄປຢ້ຽມຢາມຄັ້ງນີ້. ການລົງຢ້ຽມຢາມ 3 ວັນໄດ້ໃຫ້ໂອກາດແກ່ອົງການບໍ່ສັງກັດລັດ ເພື່ອປຶກສາຫາລືກັບປະຊາຊົນໃນທ້ອງຖິ່ນ. ໃນແຕ່ລະເທື່ອ ທີ່ມີການຈັດຕັ້ງ ການໄປຢ້ຽມຢາມເຂດໂຄງການ ພະນັກງານ ບໍລິສັດໄຟຟ້ານ້ຳເທີນ 2 ກໍໄດ້ຕອບຄຳຖາມຕ່າງໆທີ່ຍົກຂຶ້ນ ພ້ອມທັງເອົາໃຈໃສ່ນຳຄວາມສົນໃຈແລະຄຳເຫັນຂອງແຕ່ລະອົງການບໍ່ສັງກັດລັດ. ນອກນັ້ນ, ການບັນຍາຍສະຫຼຸບຢູ່ວຽງຈັນ ກໍຈັດຂຶ້ນໃນມື້ທີ 4 ເພື່ອເຮັດໃຫ້ພະນັກງານ ຂອງອົງການບໍ່ສັງກັດລັດ

ຕາຕະລາງ 5.3. ກົນໄກການປຶກສາຫາລືທີ່ນຳໃຊ້ກັບກັບຜູ້ກ່ຽວຂ້ອງຕ່າງໆ

| ຜູ້ມີສ່ວນກ່ຽວຂ້ອງ/ ເຂດໂຄງການ | ຂ່າວສານຕົ້ນຕໍ | ກຳນົດໝາຍ | ກົນໄກແລະວິທີ |
|---|---|---|---|
| ປະຊາຊົນຢູ່ ພູພຽງນາກາຍທີ່ຈະໄດ້ຖືກຍົກຍ້າຍ ຈຳນວນ 5.864 ຄົນ | ແຜນຍົກຍ້າຍຈັດສັນປະຊາຊົນ, ການເລືອກສະຖານທີ່, ແຜນຜັງບ້ານ, ຮູບແບບດຳລົງຊີວິດ, ການຊົດເຊີຍຄ່າເສຍຫາຍ, ການຝຶກອົບຮົມ | ການປຶກສາຫາລືຢ່າງເປັນລະບົບ 1997-2000<br>ການປຶກສາຫາລືຢ່າງສະໝໍ່າສະເໝີມາແຕ່ປີ 2001 ຕາມຄວາມຈຳເປັນ | ເຕັກນິກການປະເມີນຊົນນະບົດແບບເລັ່ງລັດແລະການປະເມີນຊົນນະບົດແບບມີສ່ວນຮ່ວມ.<br>ການເຜີຍແຜ່ຂ່າວສານ, ກອງປະຊຸມແລະການປຶກສາຫາລື (ລະດັບບ້ານ, ກຸ່ມແລະບຸກຄົນ) ເພື່ອຂໍຄຳຄິດຄຳເຫັນ, ປິດສະເຕີ, ປຶ້ມສະຫຼຸບຫຍໍ້, ສູນຂ່າວສານແລະການໄປຢ້ຽມຢາມເຂດໂຄງການ. |
| ປະຊາຊົນທີ່ມີຊັບສິນຢູ່ໃນເຂດດິນຂອງໂຄງການບ່ອນອື່ນ | ແຜນຍົກຍ້າຍຈັດສັນປະຊາຊົນ, ການເລືອກສະຖານທີ່ຖ້າຫາກຈຳເປັນ | ການປຶກສາຫາລືຢ່າງສະໝໍ່າສະເໝີມາແຕ່ປີ 2003, | ການເຜີຍແຜ່ຂ່າວສານ, ກອງປະຊຸມແລະການປຶກສາຫາລື (ລະດັບບ້ານ, ກຸ່ມແລະບຸກຄົນ) ເພື່ອຂໍຄຳຄິດຄຳເຫັນ, ປິດສະເຕີ, ປຶ້ມສະຫຼຸບຫຍໍ້, ສູນຂ່າວສານແລະການໄປຢ້ຽມຢາມເຂດໂຄງການ. |
| ປະຊາຊົນທີ່ມີຊັບສິນຢູ່ຕາມຄອງລຸ່ມ | ແຜນຍົກຍ້າຍຈັດສັນປະຊາຊົນ, ການເລືອກສະຖານທີ່, ແຜນຜັງບ້ານ, ຮູບແບບດຳລົງຊີວິດ, ການຊົດເຊີຍຄ່າເສຍຫາຍ, ການຝຶກອົບຮົມ | ການປຶກສາຫາລືຢ່າງເປັນລະບົບ ໃນປີ 1997, 2003, 2005.<br>ການປຶກສາຫາລືຢ່າງເປັນລະບົບ ແຕ່ປີ 2007 ຕາມຄວາມຈຳເປັນ | ເຕັກນິກການປະເມີນຊົນນະບົດແບບເລັ່ງລັດແລະການປະເມີນຊົນນະບົດແບບມີສ່ວນຮ່ວມ.<br>ການເຜີຍແຜ່ຂ່າວສານ, ກອງປະຊຸມແລະການປຶກສາຫາລື (ລະດັບບ້ານ, ກຸ່ມແລະບຸກຄົນ) ເພື່ອຂໍຄຳຄິດຄຳເຫັນ, ປິດສະເຕີ, ປຶ້ມສະຫຼຸບຫຍໍ້, ສູນຂ່າວສານແລະການໄປຢ້ຽມຢາມເຂດໂຄງການ. |
| ປະຊາຊົນທີ່ຢູ່ຕາມເຊບັ້ງໄຟ | ການຫຼຸດຜ່ອນຜົນກະທົບ, ຜົນກະທົບຂອງໂຄງການຕາມເຊບັ້ງໄຟ, ການຊົດເຊີຍຄ່າເສຍຫາຍ, ການຝຶກອົບຮົມສຳລັບຄອບຄົວທີ່ໄດ້ຮັບຜົນກະທົບໂດຍກົງ, ເຂດ | ການປຶກສາຫາລືຢ່າງເປັນລະບົບ ໃນປີ 1997, 2003, 2005. | ເຕັກນິກການປະເມີນຊົນນະບົດແບບເລັ່ງລັດແລະການປະເມີນຊົນນະບົດແບບມີສ່ວນຮ່ວມ.<br>ການເຜີຍແຜ່ຂ່າວສານ, ກອງປະຊຸມແລະການປຶກສາຫາລື (ລະດັບບ້ານ, ກຸ່ມແລະບຸກຄົນ) ເພື່ອຂໍຄຳຄິດຄຳ |

| | | | |
|---|---|---|---|
| | ບ້ານໃໝ່ແລະການບໍລິການ ສະໜັບສະໜູນ | | ເຫັນ, ປິດສະເຕີ, ປຶ້ມສະຫຼຸບຫຍໍ້, ສູນຂ່າວສານແລະການໄປຢ້ຽມຢາມເຂດໂຄງການ. |
| ປະຊາຊົນຢູ່ຕາມແລວສາຍສົ່ງ | ການຫຼຸດຜ່ອນຜົນກະທົບ, ຜົນກະທົບຂອງໂຄງການ, ການຊົດເຊີຍຄ່າເສຍຫາຍ, ແລະການບໍລິການ ສະໜັບສະໜູນ | ການປຶກສາຫາລືຢ່າງເປັນລະບົບ ໃນປີ 1997 ແລະ 2005 | ເຕັກນິກການປະເມີນຊົນນະບົດແບບເລັ່ງລັດແລະການປະເມີນຊົນນະບົດແບບມີສ່ວນຮ່ວມ.<br><br>ການເຜີຍແຜ່ຂ່າວສານ, ກອງປະຊຸມແລະການປຶກສາຫາລື (ລະດັບບ້ານ, ກຸ່ມແລະບຸກຄົນ) ເພື່ອຂໍຄໍາຄິດຄໍາເຫັນ, ປິດສະເຕີ, ປຶ້ມສະຫຼຸບຫຍໍ້, ສູນຂ່າວສານແລະການໄປຢ້ຽມຢາມເຂດໂຄງການ. |
| ອໍານາດການປົກຄອງທ້ອງຖິ່ນ | ແຜນຜັງຂອງໂຄງການ, ຜົນກະທົບແລະການຫຼຸດຜ່ອນຜົນກະທົບ, ການຍົກຍ້າຍຈັດສັນປະຊາຊົນ, ການຊົດເຊີຍຄ່າເສຍຫາຍ ແລະ ຕາຕະລາງແລະງົບປະມານເພື່ອຈັດຕັ້ງປະຕິບັດ ລວມທັງນະໂຍບາຍເພື່ອປົກປັກຮັກສາສິ່ງແວດລ້ອມຂອງທະນາຄານໂລກ | ກອງປະຊຸມ, ການປຶກສາຫາລືແລະສໍາມະນາ ມາແຕ່ປີ 1995.<br><br>ການປຶກສາຫາລືໃນລະດັບທ້ອງຖິ່ນ, ລະດັບເຂດແລະຊາດ ມາແຕ່ປີ 1996. | ການຝຶກອົບຮົມແລະສ້າງຄວາມສາມາດມາແຕ່ 1997 ກ່ຽວກັບເຕັກນິກການປຶກສາຫາລືແລະການເຂົ້າຮ່ວມໃນຖານະສະມາຊິກຂອງຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ.<br><br>ການຊ່ວຍເຫຼືອໃນການຈັດຕັ້ງໜ່ວຍງານປຶກສາຫາລືແລະຂັ້ນຕອນຕິດຕາມກວດກາ ຊຶ່ງເປັນພາກສ່ວນໜຶ່ງຂອງວຽກຂອງຄະນະກໍາມະການຍົກຍ້າຍຈັດສັນປະຊາຊົນ. |
| ອົງການຕ່າງໆຂອງແຂວງ | ແຜນຜັງຂອງໂຄງການ, ຜົນກະທົບແລະການຫຼຸດຜ່ອນຜົນກະທົບ, ການຍົກຍ້າຍຈັດສັນປະຊາຊົນ, ການຊົດເຊີຍຄ່າເສຍຫາຍ ແລະ ຕາຕະລາງແລະງົບປະມານເພື່ອຈັດຕັ້ງປະຕິບັດ ລວມທັງນະໂຍບາຍເພື່ອປົກປັກຮັກສາສິ່ງແວດລ້ອມຂອງທະນາຄານໂລກ | ກອງປະຊຸມ, ການປຶກສາຫາລືແລະສໍາມະນາ ມາແຕ່ປີ 1995.<br><br>ການປຶກສາຫາລືໃນລະດັບທ້ອງຖິ່ນ, ລະດັບເຂດແລະຊາດ ມາແຕ່ປີ 1996. | ການຝຶກອົບຮົມແລະສ້າງຄວາມສາມາດມາແຕ່ 1997 ກ່ຽວກັບເຕັກນິກການປຶກສາຫາລື.<br><br>ການຊ່ວຍເຫຼືອໃນການຈັດຕັ້ງໜ່ວຍງານປຶກສາຫາລືແລະຂັ້ນຕອນຕິດຕາມກວດກາ ຊຶ່ງເປັນພາກສ່ວນໜຶ່ງຂອງວຽກຂອງຄະນະກໍາມະການຍົກຍ້າຍຈັດສັນປະຊາຊົນ.<br><br>ແປເອກະສານໂຄງການອັນສໍາຄັນເປັນພາສາລາວເພື່ອແຈກຢາຍ. |
| ອົງການມະຫາຊົນ (ສະຫະພັນແມ່ຍິງ, ແນວລາວສ້າງຊາດ) | ແຜນຜັງຂອງໂຄງການ, ຜົນກະທົບແລະການຫຼຸດຜ່ອນຜົນກະທົບ, ການຍົກຍ້າຍ | ກອງປະຊຸມ, ການປຶກສາຫາລືແລະສໍາມະນາ ມາແຕ່ປີ 1995. | ການຝຶກອົບຮົມແລະສ້າງຄວາມສາມາດມາແຕ່ 1997 ກ່ຽວກັບເຕັກນິກການປຶກສາຫາລືແລະການເຂົ້າ |

| | | | |
|---|---|---|---|
| | ຈັດສັນປະຊາຊົນ, ການຊົດເຊີຍຄ່າເສຍຫາຍ ແລະ ຕາຕະລາງແລະງົບປະມານເພື່ອຈັດຕັ້ງປະຕິບັດ ລວມທັງນະໂຍລາຍເພື່ອປົກປັກຮັກສາສິ່ງແວດລ້ອມຂອງທະນາຄານໂລກ | ການປຶກສາຫາລືໃນລະດັບທ້ອງຖິ່ນ, ລະດັບເຂດແລະຊາດ ມາແຕ່ປີ 1996. | ຮ່ວມໃນຖານະສະມາຊິກຂອງຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ.<br>ການຊ່ວຍເຫຼືອໃນການຈັດຕັ້ງໜ່ວຍງານປຶກສາຫາລືແລະຂັ້ນຕອນຕິດຕາມກວດກາ ຊຶ່ງເປັນພາກສ່ວນໜຶ່ງຂອງ ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ ແລະໜ່ວຍງານອື່ນໆ.<br>ແປເອກກະສານໂຄງການອັນສຳຄັນເປັນພາສາລາວເພື່ອແຈກຢາຍ. |
| ລັດຖະບານ (ກະຊວງ ແລະ ອວຕສ) | ແຜນຜັງຂອງໂຄງການ, ຜົນກະທົບແລະການຫຼຸດຜ່ອນຜົນກະທົບ, ການຍົກຍ້າຍຈັດສັນປະຊາຊົນ, ການຊົດເຊີຍຄ່າເສຍຫາຍ, ຕາຕະລາງແລະງົບປະມານເພື່ອຈັດຕັ້ງປະຕິບັດ, ນະໂຍລາຍເພື່ອປົກປັກຮັກສາສິ່ງແວດລ້ອມຂອງທະນາຄານໂລກ | ກອງປະຊຸມ, ການປຶກສາຫາລືແລະສຳມະນາ ມາແຕ່ປີ 1995.<br>ການປຶກສາຫາລືໃນລະດັບທ້ອງຖິ່ນ, ລະດັບເຂດແລະຊາດ ມາແຕ່ປີ 1996. | ການຝຶກອົບຮົມແລະສ້າງຄວາມສາມາດມາແຕ່ 1997 ກ່ຽວກັບເຕັກນິກການປຶກສາຫາລືແລະການເຂົ້າຮ່ວມໃນຖານະສະມາຊິກຂອງຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ.<br>ການຊ່ວຍເຫຼືອໃນການຈັດຕັ້ງໜ່ວຍງານປຶກສາຫາລືໃນທ້ອງຖິ່ນແລະຂັ້ນຕອນຕິດຕາມກວດກາ.<br>ແປເອກກະສານໂຄງການອັນສຳຄັນເປັນພາສາລາວເພື່ອແຈກຢາຍ. |
| ອົງການບໍ່ສັງກັດລັດ ໃນທ້ອງຖິ່ນ | ແຜນຜັງຂອງໂຄງການ, ຜົນກະທົບແລະການຫຼຸດຜ່ອນຜົນກະທົບ, ການຍົກຍ້າຍຈັດສັນປະຊາຊົນ, ການຊົດເຊີຍຄ່າເສຍຫາຍ ແລະ ຕາຕະລາງແລະງົບປະມານເພື່ອຈັດຕັ້ງປະຕິບັດ ລວມທັງນະໂຍລາຍເພື່ອປົກປັກຮັກສາສິ່ງແວດລ້ອມຂອງທະນາຄານໂລກ | ການປຶກສາຫາລືໃນລະດັບທ້ອງຖິ່ນ, ລະດັບເຂດແລະຊາດ ມາແຕ່ປີ 1996. | ເຂົ້າຮ່ວມໃນ ກອງປະຊຸມ ແລະການປຶກສາຫາລື ໃນລະດັບທ້ອງຖິ່ນ, ລະດັບເຂດແລະຊາດ ແລະລົງຢ້ຽມຢາມໂຄງການ.<br>ການປະສານແຜນງານລະຫວ່າງໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ ແລະການເຄື່ອນໄຫວຂອງ ອົງການບໍ່ສັງກັດລັດໃນທ້ອງຖິ່ນ.<br>ແປເອກກະສານໂຄງການອັນສຳຄັນເປັນພາສາລາວເພື່ອແຈກຢາຍ. |
| ອົງການບໍ່ສັງກັດລັດສາກົນ | ແຜນຜັງຂອງໂຄງການ, ຜົນກະທົບແລະການຫຼຸດຜ່ອນ | ການປຶກສາຫາລືແລະການລາຍງານສະຫຼຸບມາແຕ່ປີ | ເຂົ້າຮ່ວມໃນ ກອງປະຊຸມ ແລະການປຶກສາຫາລື ໃນລະດັບຊາດ ແລະລົງ |

| | | | |
|---|---|---|---|
| | ຜົນກະທົບ, ການຍົກຍ້າຍຈັດສັນປະຊາຊົນ, ການຊົດເຊີຍຄ່າເສຍຫາຍ ແລະ ຕາຕະລາງແລະງົບປະມານເພື່ອຈັດຕັ້ງປະຕິບັດ ລວມທັງນະໂຍລາຍເພື່ອປົກປັກຮັກສາສິ່ງແວດລ້ອມຂອງທະນາຄານໂລກ | 1997. | ຢັ້ງມຢາມໂຄງການ.<br>ແປເອກກະສານໂຄງການອັນສໍາຄັນເປັນພາສາລາວເພື່ອແຈກຢາຍ. |
| ຜູ້ມີສ່ວນກ່ຽວຂ້ອງ | ແຜນຜັງຂອງໂຄງການ, ຜົນກະທົບແລະການຫຼຸດຜ່ອນຜົນກະທົບ, ການຍົກຍ້າຍຈັດສັນປະຊາຊົນ, ການຊົດເຊີຍຄ່າເສຍຫາຍ ແລະ ຕາຕະລາງແລະງົບປະມານເພື່ອຈັດຕັ້ງປະຕິບັດ ລວມທັງນະໂຍລາຍເພື່ອປົກປັກຮັກສາສິ່ງແວດລ້ອມຂອງທະນາຄານໂລກ | ການປຶກສາຫາລືແລະການລາຍງານສະຫຼຸບມາແຕ່ປີ 1997. | ເຂົ້າຮ່ວມໃນ ກອງປະຊຸມ ແລະການປຶກສາຫາລື ໃນລະດັບທ້ອງຖິ່ນ, ລະດັບເຂດແລະຊາດ ແລະລົງຢັ້ງມຢາມໂຄງການ.<br>ແປເອກກະສານໂຄງການອັນສໍາຄັນເປັນພາສາລາວເພື່ອແຈກຢາຍ. |

ແລະລັດຖະບານ ໄດ້ມີການປຶກສາຫາລືໃນເງື່ອນໄຂຕ່າງໆ.

### ການຕິດຕາມ

ກອງປະຊຸມແລະການປຶກສາຫາລືກັນ ລະຫວ່າງບໍລິສັດໄຟຟ້ານໍ້າເທີນ 2, ລັດຖະບານ ສປປລາວ, ນັກການທູດ ແລະອົງການບໍ່ສັງກັດລັດຈໍານວນໜຶ່ງ ລວມທັງຜູ້ຕາງໜ້າຂອງອົງການໃຫ້ທຶນ ກໍໄດ້ຈັດຕັ້ງຂຶ້ນຫຼາຍໆຄັ້ງທີ່ວຽງຈັນ, ປາຣີແລະວໍຊິງຕັນ. ນອກນັ້ນ ຍັງມີການສໍາພາກຂ່າວອີກ (ໜັງສືພິມ, ວິທະຍຸແລະໂທລະສັບ) ແລະຍັງໄດ້ຈັດການໄປຢັ້ງມຢາມເຂດໂຄງການຕື່ມ ຊຶ່ງມີຜູ້ຕາງໜ້າກຸ່ມພິເສດເຂົ້າຮ່ວມນໍາອີກດ້ວຍ.

## *ຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ແຕ່ໄດ້ອອກຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສະບັບປັບປຸງຕື່ມເພື່ອປະເມີນໂຄງການ*

### ໄລຍະສໍາຄັນຂອງການເຜີຍແຜ່ຂ່າວສານການປຶກສາຫາລືແລະເປີດເຜີຍຂໍ້ມູນ

ຕາຕະລາງ ເວລາສໍາລັບເຮັດຂະບວນການຮ່າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ໃຫ້ສໍາເລັດ ແຕ່ໄດ້ອອກຮ່າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສະບັບປັບປຸງຕື່ມ ແມ່ນມີໃນຕາຕະລາງ 5.5 ແລະສາມາດສະຫຼຸບຫຍໍ້ໄດ້ດັ່ງນີ້: ການເຜີຍແຜ່ຂ່າວສານແລະການປຶກສາຫາລືກ່ອນຈະມີການປະເມີນໂຄງການ ຈະໄດ້ດໍາເນີນໃນລະດັບທ້ອງຖິ່ນ, ລະດັບຊາດ, ລະດັບພາກພື້ນແລະສາກົນ. ໃນລະດັບທ້ອງຖິ່ນ, ການປຶກສາຫາລື ກ່ອນ

ຕາຕະລາງ 5.4 ການພົວພັນກັບສື່ມວນຊົນມາແຕ່ເດືອນ 8 ປີ 2000

| ອ/ດ | ອົງການຈັດຕັ້ງ | ບ່ອນຈັດ | ວັນທີ/ງານ |
|---|---|---|---|
| 1. | ໂທລະພາບຝະລັ່ງຊ່ອງ 2 | ປາຣີ | 3/8/2000, ອອກຂ່າວໃນລາຍການ "ເຊໂອໂປລິດ", 55 ນາທີ |
| 2. | ໂທລະພາບຝະລັ່ງຊ່ອງ 2 | ປາຣີ | 3/6/2001 "ບໍ່ຄວນຝັນ", 15 ນາທີ |
| 3. | ໜັງສືພິມເຮໂຣນຫຼີບູນ | ນິວຢອກ | ລົງຢັ້ງມຢາມເຂດໂຄງການ ໃນຕົ້ນເດືອນ 3/2002 ແລະ ອອກຂ່າວໃນວັນທີ 11/3/02 |
| 4. | ເນເຊີນ (ໄທ) | ບາງກອກ | ງານຊົມໂປຊຽມ "ນ້ຳເທີນ 2% ປະຕູສູ່ອະນາຄົດ" 3/7/02 |
| 5. | ຣອຍເຕີ/ສຽງອາເມລິກາ/ວິທະຍຸຝະລັ່ງພາສາສາກົນ | ບາງກອກ | ງານຊົມໂປຊຽມ "ນ້ຳເທີນ 2% ປະຕູສູ່ອະນາຄົດ" 3/7/02 |
| 6. | ອົງການຂ່າວຝະລັ່ງ | ຮາໂນ້ຍ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 7. | ຂ່າວຮ່ວມ | ບາງກອກ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 8. | ຂ່າວສານ ບາງກອກປົດສ໌ | ບາງກອກ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 9. | ວິທະຍຸບີບີຊີ | ບາງກອກ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 10. | ບູຊະແນັດເດຍ | ບາງກອກ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 11. | ເນເຊີນ | ບາງກອກ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 12. | ຣອຍເຕີ/ສຽງອາເມລິກາ/ວິທະຍຸຝະລັ່ງພາສາສາກົນ/ເນເຊີນ | ບາງກອກ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 13. | ວິທະຍຸເອເຊຍເສຣີ | ວໍຊິງຕັນ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 14. | ຂ່າວພາສາຕ່າງປະເທດ | ວຽງຈັນ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 15. | ເລີ ເຣໂນວາເຕີ | ວຽງຈັນ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 16. | ວຽງຈັນໄທມ໌ | ວຽງຈັນ | ລົງຢັ້ງມຢາມເຂດໂຄງການ ແຕ່ 26-28/11/02 |
| 17. | ວິທະຍຸຝະລັ່ງພາສາສາກົນ | ປາຣີ | ສຳພາດທາງໂທລະສັບ ໃນວັນທີ 13/12/02 |
| 18. | ໂທລະພາບບີບີຊີ | ລອນດອນ/ບາງກອກ | ພະນັກງານຂ່າວ ໂທລະພາບບີບີຊີ ໄດ້ມາລາວແລະລົງຢັ້ງມຢາມເຂດໂຄງການ ແຕ່ 13-14/2/03; ໂທລະພາບ ໄດ້ອອກ ຂ່າວໃນວັນທີ 19 ແລະ 23/2/03 ໃນລາຍການຂ່າວໂລກຂອງບີບີຊີ, ລາຍງານຂ່າວ, ລາຍການອອກຂ່າວພາຍໃນຂອງບີບີຊີ |
| 19. | ໂທລະພາບລາວ | ວຽງຈັນ | ໂທລະພາບໄດ້ອອກຂ່າວແລະສະເໜີວີດີໂອກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ ແລະ ແຜນສິ່ງແວດລ້ອມ ທີ່ໄດ້ຜະລິດຂຶ້ນໃນເດືອນ 4/2003 |
| 20. | ໜັງສືພິມຍີ່ປຸ່ນ ອາຊາຮີຊິມບຸນ | ໂຕກຽວ/ນິວເດນລີ | ລົງຢັ້ງມຢາມເຂດໂຄງການແຕ່ 13-14/7/02 |
| 21. | ເດີເອໂຄໂນມິດສ໌ | ບາງກອກ | ອອກເລື້ອງກ່ຽວກັບລາວແລະໂຄງການ ໃນວັນທີ 18/7/83, ລົງຢັ້ງມຢາມເຂດໂຄງການ ແຕ່ 25-26/9/03ແລະ ອອກ |

| | | | |
|---|---|---|---|
| | | | ຂ່າວໜຶ່ງກ່ຽວກັບການພັດທະນາແມ່ນ້ຳຂອງໃນວັນທີ 30/12/03 |
| 22. | ໂທລະພາບຍີ່ປຸ່ນ | ບາງກອກ | ຢ້ຽມຢາມລາວແລະເຂດໂຄງການ ແຕ່ 25-26/9/03 |
| 23. | ວິທະຍຸອົດສະຕຼາລີ | ແຄັນເບຣາ | ສຳພາດທາງໂທລະສັບ ໃນວັນທີ 30/10/03 |
| 24. | ວຽງຈັນໄທມ໌ | ວຽງຈັນ | ລົງຢ້ຽມຢາມເຂດໂຄງການ ແຕ່ 9-11/6/04 |
| 25. | ຢູບີໄອ ສະມາສອນນັກຂ່າວແຫ່ງຊາດ | ວໍຊິງຕັນ | ລົງຢ້ຽມຢາມເຂດໂຄງການ ແຕ່ 9-11/6/04 |
| 26. | ເນເຊີນ | ບາງກອກ | ລົງຢ້ຽມຢາມເຂດໂຄງການ ແຕ່ 9-11/6/04 |
| 27. | ໜັງສືພິມ "ຊາວໄຊນາມໍນິງປົດສ໌" | ບາງກອກ | ລົງຢ້ຽມຢາມເຂດໂຄງການ ແຕ່ 9-11/6/04 |
| 28. | ບະລຸມເບີກ | ບາງກອກ | ລົງຢ້ຽມຢາມເຂດໂຄງການ ແຕ່ 9-11/6/04 |
| 29. | ຄອມພັດສ໌ | ຈັກກາຕາ | ລົງຢ້ຽມຢາມເຂດໂຄງການ ແຕ່ 26-27/6/04 |
| 30. | ໜັງສືພິມ ໂວນສະຕຼີດ | ບາງກອກ | ລົງຢ້ຽມຢາມເຂດໂຄງການ ແຕ່ 29/7-3/8/04 |
| 31. | ໜັງສືພິມໄທ (ທັງໝົດ), ເລີມົງເດີ, ລີເບຣາຊົງ ອົງການຂ່າວຝະລັ່ງ, ຣອຍເຕີ | ທົ່ວໂລກ | ລົງຢ້ຽມຢາມເຂດໂຄງການ ແຕ່ 31/8-27/9/04 |

ອື່ນໝົດ ຈະໄດ້ດຳເນີນໃນຮູບຂອງກອງປະຊຸມວິຊາການ ແລະການສະເໜີບົດບັນຍານແລະຕິດຮູບປິດສະເຕີ ກ່ຽວກັບຜົນກະທົບຂອງໂຄງການ ທີ່ຄາດວ່າຈະເກີດຂຶ້ນ. ກຸ່ມທີ່ໄດ້ມີການປຶກສາຫາລືມາແລ້ວ ມີຄື: (i) ຜູ້ທີ່ຖືກຍົກຍ້າຍຢູ່ພູພຽງນາກາຍ; (ii) ປະຊາຊົນທີ່ຢູ່ຕາມແຄມເຂບັ້ງໄຟ. ໄທບ້ານທີ່ມີຊັບສິນຢູ່ໃນທີ່ດິນຂອງໂຄງການ ກໍຈະໄດ້ມີການປຶກສາຫາລືຄືກັນທັງກ່ອນແລະຫຼັງປະເມີນໂຄງການ. ໃນລະດັບຊາດ, ໄດ້ມີການປຶກສາຫາລືກັບອົງການບໍ່ສັງກັດລັດພາຍໃນແລະອົງການຈັດຕັ້ງມະຫາຊົນ, ໜ່ວຍງານຂອງລັດທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກຕ່າງໆ ແລະມະຫາຊົນທົ່ວໄປ. ອັນນີ້ ແມ່ນໄດ້ເຮັດມາແລ້ວໂດຍມີການຈັດກອງປະຊຸມ ແລະສະເໜີບົດສຳລັບອົງການລັດທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກໂຄງການ (ມີ ອວຕສ ທີ່ຈະໄດ້ກວດກາແລະສະເໜີລາຍງານໃຫ້ລັດຖະບານ), ມັນມີການທົບທວນໄປມາ ແລະຂະບວນການຝຶກອົບຮົມ. ໃນລະດັບພາກພື້ນ ແລະສາກົນ, ມັນລວມເອົາການປຶກສາຫາລືກັບຜູ້ໃຫ້ທຶນ, ອົງການບໍ່ສັງກັດລັດສາກົນ ແລະຜູ້ກ່ຽວຂ້ອງຈາກໄທ ຊຶ່ງຈະຈັດເປັນກອງປະຊຸມທົ່ວໄປ ທີ່ບາງກອກ, ໂຕກຽວ, ປາຣີ, ວໍຊິງຕັນແລະວຽງຈັນ. ເອກກະສານກ່ຽວກັບການປົກປັກຮັກສາສິ່ງແວດລ້ອມແລະສັງຄົມ ຊຶ່ງໄດ້ດັດແປງຕາມການປຶກສາຫາລື ທີ່ກ່າວມາເທິງນີ້ ຈະໄດ້ນຳເອົາມາສະເໜີ ໃຫ້ຜູ້ກ່ຽວຂ້ອງກັບໂຄງການທັງໝົດອີກ ກ່ອນຈະມີການປະເມີນ ໂດຍສະຖາບັນການເງິນສາກົນ ແລະ ໃນ 120ວັນ ກ່ອນທີ່ຄະນະກຳມະການບໍລິຫານຂອງທະນາຄານໂລກ ເລີ້ມພິຈາລະນາຮັບຮອງເອົາ (ຕາຕະລາງ 5.5). ໃນໄລຍະນີ້, ຜູ້ຈັດຕັ້ງປະຕິບັດຂອງລັດ ຈະໄດ້ຮັບເອກກະສານເປັນພາສາລາວ. ການເຜີຍແຜ່ຂ່າວສານໃຫ້ຜູ້ທີ່ໄດ້ຮັບຜົນກະທົບ ຈະໄດ້ດຳເນີນໂດຍແຜນງານຂ່າວສານແລະລົງເຜີຍແຜ່ເອກກະສານ ແລະ ຈະໄດ້ແຈກເອກກະສານພາສາລາວໃຫ້. ນອກຈາກກຸ່ມນີ້ແລ້ວ ຈະໄດ້ເອົາເອກກະສານສະບັບປັບປຸງສົມບູນໃຫ້. ພາຍຫຼັງທີ່

ຕາຕະລາງ 5.5 ຕາຕະລາງເວລາເພື່ອເຮັດການປຶກສາຫາລືແລະເຜີຍແຜ່ຂ່າວສານກ່ຽວກັບບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ

| ລາຍລະອຽດ | ເວລາ | | |
|---|---|---|---|
| | ‘03 | ‘04 | ‘05 |
| ສຳເລັດຮ່າງສະບັບປັບປຸງ | | | |
| ສົ່ງໃຫ້ສະຖາບັນການເງິນສາກົນແລະມວນຊົນທົ່ວໄປ ທະນາຄານໂລກແລະທະນາຄານພັດທະນາອາຊີ ປະເມີນບົດດັ່ງກ່າວ | | | |
| ສຳເລັດສະບັບສຸດທ້າຍ-ໄລຍະ 2 | | | |
| 1. ລະດັບທ້ອງຖິ່ນ | | | |
| ສ້າງເອກກະສານເພື່ອປຶກສາຫາລື | | | |
| ປຶກສາຫາລືກັບປະຊາຊົນທ້ອງຖິ່ນ | | | |
| 2. ລະດັບຊາດ | | | |
| ໄລຍະອ່ານເອກກະສານ | | | |
| ປະຊຸມກັບມວນຊົນ | | | |
| 3. ລະດັບພາກພື້ນ | | | |
| ເຜີຍແຜ່ຂ່າວສານຜ່ານເວັບໄຊ | | | |
| ໄລຍະອ່ານເອກກະສານ | | | |
| ປະຊຸມກັບມວນຊົນ | | | |
| 4. ລະດັບສາກົນ | | | |
| ເຜີຍແຜ່ຂ່າວສານຜ່ານເວັບໄຊ | | | |
| ໄລຍະອ່ານເອກກະສານ | | | |
| ປະຊຸມກັບມວນຊົນ | | | |

| | | | | |
|---|---|---|---|---|
| ທົບທວນແລະເຜີຍແຜ່ຂ່າວສານ | | | | |
| ຜະລິດຮ່າງເອກະສານສະບັບສຸດທ້າຍ | | | | |
| ອອກເອກະສານສະບັບສຸດທ້າຍ | | | | |
| ທະນາຄານໂລກແລະທະນາຄານພັດທະນາອາຊີ | | | | |
| ປະເມີນບົດນີ້ | | | | |
| **ເຜີຍແຜ່ເອກະສານ ຫຼັງການປະເມີນຜົນ ໄລຍະ 3** | | | | |
| ກວດກາແລະເຜີຍແຜ່ເອກະສານ | | | | |
| ເຜີຍແຜ່ໃຫ້ມວນຊົນໃນຂ່າວສານຂອງ | | | | |
| ທະນາຄານໂລກ | | | | |
| ຮັບເອົາຄຳເຫັນ | | | | |
| ທົບທວນແລະຕົກລົງ | | | | |
| ແປຮ່າງບົດປະເມີນຜົນສຸດທ້າຍ | | | | |
| ລັດຖະບານ ສປປລາວ ທົບທວນແລະຕົກລົງ | | | | |
| ທະນາຄານໂລກ ທົບທວນແລະຕົກລົງ | | | | |
| ຄະນະຊ່ຽວຊານກັ່ນກອງດ້ານສິ່ງແວດລ້ອມແລະ | | | | |
| ສັງຄົມ ທົບທວນແລະຕົກລົງ | | | | |
| *ຄະນະນຳທະນາຄານໂລກແລະທະນາຄານ* | | | | |
| *ພັດທະນາອາຊີ ທົບທວນແລະຕົກລົງ* | | | | |
| ສຳເລັດສ້າງເອກະສານເພື່ອຈັດຕັ້ງປະຕິບັດ | | | | |

ຄະກຳມະການບໍລິຫານທະນາຄານໂລກ ຕົກລົງແລ້ວ, ຈະບໍ່ໄດ້ເຮັດການກວດກາທຍັງຕື່ມ ສຳລັບເອກກະສານວາງແຜນຂອງໂຄງການ ແລະຈາກນັ້ນເອກກະສານດັ່ງກ່າວ ຈະມີໄວ້ໃຫ້ຜູ້ກ່ຽວຂ້ອງທຸກຄົນ. ອັນສຳຄັນເປັນພິເສດ ແມ່ນຜູ້ຈັດຕັ້ງປະຕິບັດຂອງລັດຖະບານ ສປປລາວ ຈະໄດ້ຮັບເອກກະສານແປເປັນພາສາລາວທັງໝົດ ແລະຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ກໍຈະໄດ້ບົດແປເປັນພາສາລາວຈຳນວນໜຶ່ງ. ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຍັງຈະໄດ້ຮັບການບໍລິການ ຈາກແຜນງານຂ່າວສານແລະລົງເຜີຍແຜ່ເອກກະສານ. ສ່ວນເຫຼືອ ຈະໄດ້ຮັບເອກກະສານສະບັບສຸດທ້າຍ ທີ່ໄດ້ກວດກາແລ້ວ.

## ຜູ້ກ່ຽວຂ້ອງຕົ້ນຕໍໃນການປຶກສາຫາລືແລະເຜີຍແຜ່ຂ່າວສານໃນຕໍ່ໜ້າ

ຕາຕະລາງ 5.6 ໄດ້ຊີ້ໃຫ້ເຫັນປະເພດຂອງການປຶກສາຫາລືແລະເຜີຍແຜ່ຂ່າວສານ ໂດຍລວມ ຊຶ່ງໄດ້ດຳເນີນມາແລ້ວ ແລະຈະໄດ້ເຮັດກັບແຕ່ລະກຸ່ມອີກ ແຕ່ແຜນງານຂ່າວສານແລະລົງເຜີຍແຜ່ເອກກະສານ ກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຢູ່ທ້ອງຖິ່ນ ແລະການສະໜອງເອກກະສານພາສາອັງກິດຄົບຖ້ວນຫຼືບົດແປຄົບຖ້ວນ ຫຼື ບົດສະຫຼຸບເອກກະສານເຫຼົ່ານັ້ນ.

## ການເຜີຍແຜ່ຂ່າວສານໃຫ້ມວນຊົນທົ່ວໄປ

ການເຄື່ອນໄຫວຜ່ານມາ ແມ່ນແນໃສ່ສ້າງຈິດສຳນຶກໃຫ້ມວນຊົນກ່ຽວກັບໂຄງການ. ລັດຖະບານ ສປປລາວ ກໍໄດ້ຈັດງານຊົມໄປຊຽມຂຶ້ນທີ່ວຽງຈັນໃນວັນທີ 3 ກໍລະກົດ 2003, ບັນດາທູດ, ສື່ມວນຊົນ ແລະກຸ່ມອົງການບໍ່ສັງກັດລັດ ກໍໄດ້ລົງໄປຢ້ຽມຢາມເຂດໂຄງການ, ເວບໄຊ (www.namtheun2.com) ກໍໄດ້ປັບປຸງໃຫ້ທັນການ, ເວບໄຊຂອງລັດຖະບານກໍໄດ້ສ້າງຂຶ້ນ, ສື່ຕ່າງໆ (ແຜ່ນພັບ, ເຈ້ຍໂຄສະນາແລະອອກຂ່າວໃນເລື່ອງຕ່າງໆ) ກໍໄດ້ຜະລິດອອກແລະແຈກຢ່າງກວ້າງຂວາງ. ຍຸດທະສາດສ້າງຈິດສຳນຶກກໍໄດ້ສືບຕໍ່ໃນວຽກງານດັ່ງຕໍ່ໄປນີ້:

### ສູນຂ່າວສານ

ໄດ້ມີການສ້າງສູນຂ່າວສານເພີ້ມຕື່ມ ໃນບາງບ່ອນຂອງເຂດໂຄງການ ຄື ຢູ່ວຽງຈັນ ເພື່ອສົ່ງເສີມການແລກປ່ຽນຂ່າວສານ ແຕ່ໄລຍະທົດທີຂອງການຈັດຕັ້ງປະຕິບັດໂຄງການ. ສູນຂ່າວສານແລະບ່ອນປະຊຸມ ຈະໄດ້ສ້າງຂຶ້ນທີ່ຫ້ອງການບໍລິສັດໄຟຟ້ານ້ຳເທີນ 2 ທີ່ວຽງຈັນໃນປີ 2004 ເພື່ອວາງສະແດງເອກກະສານ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມແລະສັງຄົມ ເປັນພາສາອັງກິດ ແລະ ບົດສະຫຼຸບພາສາລາວ, ຮູບຈຳລອງໂຄງການໃນຂະໜາດນ້ອຍກວ່າແລະມີວິດີໂອສາຍໃຫ້ເບິ່ງ.

ນອກນີ້ ຍັງມີສູນຂ່າວສານອື່ນໆລວມທັງອັນຢູ່ທ່າແຂກ, ມະຫາໄຊ ແລະ ນາກາຍ. ເພື່ອຊ່ວຍໃຫ້ສູນຂ່າວສານແລະບ່ອນປະຊຸມດັ່ງກ່າວ ເຄື່ອນໄຫວ, ສະຫະພັນແມ່ຍິງລາວ ຈະມີບົດບາດທາງດ້ານການຈັດຕັ້ງ. ນອກຈາກສະຫະພັນແມ່ຍິງລາວແລ້ວ, ພະນັກງານແຂວງແລະເມືອງ ແລະ ການຈັດຕັ້ງບ້ານແລະທ້ອງຖິ່ນ ຍັງຈະໄດ້ມາເປັນຂົວຕໍ່ ລະຫວ່າງໂຄງການແລະຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການຍ້ອນສູນຂ່າວສານແລະບ່ອນປະຊຸມ. ສູນດັ່ງກ່າວຈະໄດ້ສ້າງຂຶ້ນ ຫຼັງຈາກໄດ້ເຜີຍແຜ່ຂ່າວສານແລະປຶກສາຫາລືແລ້ວເປັນບ້ານເປັນບ້ານໄປ.

### ສື່ມວນຊົນ

ການເຜີຍແຜ່ຂ່າວສານທີ່ໄດ້ປັບປຸງໃຫ້ທັນເວລາ ຈະໄດ້ເຮັດຢ່າງເປັນປະຈຳແລະສະໝໍ່າສະເໝີ ໂດຍອອກໃນເວບໄຊຂອງໂຄງການ (ລວມທັງຈົດໝາຍຂ່າວ, ຮູບພາບ, ການອະທິບາຍຄວາມຄືບໜ້າຂອງວຽກຢູ່ສະໜາມ, ອອກຂ່າວແລະອື່ນໆ).

ຕາຕະລາງ 5.6 ບົດສະຫຼຸບກ່ຽວກັບການເຜີຍແຜ່ຂ່າວສານ ສຳລັບບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ

| ຜູ້ກ່ຽວຂ້ອງ | ພາສາ | ໄລຍະເວລາ | | | | | |
|---|---|---|---|---|---|---|---|
| | | ກ່ອນທະນາຄານໂລກແລະ ທະນາຄານພັດທະນາອາຊີ ປະເມີນໂຄງການ | | ການເຜີຍແຜ່ ໃນເວລາເຮັດການປະເມີນໂຄງການ | | ສະບັບສຸດທ້າຍ ເພື່ອຈັດຕັ້ງປະຕິບັດ | |
| | | ທັງໝົດ | ສ່ວນໜຶ່ງ | ທັງໝົດ | ສ່ວນໜຶ່ງ | ທັງໝົດ | ສ່ວນໜຶ່ງ |
| ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ | ພາສາອັງກິດ | | | | | | |
| | ພາສາລາວ | | • | | • | | • |
| ຜູ້ກ່ຽວຂ້ອງຈາກລັດຖະບານ | ພາສາອັງກິດ | | | | | | |
| | ພາສາລາວ | | • | • | | • | |
| ຜູ້ຈັດຕັ້ງປະຕິບັດຂອງລັດຖະບານ | ພາສາອັງກິດ | • | | • | | • | |
| | ພາສາລາວ | | • | • | | • | |
| ມະຫາຊົນ, ອົງການບໍ່ສັງກັດລັດ ແລະອົງການມະຫາຊົນພາຍໃນ | ພາສາອັງກິດ | • | | • | | • | |
| | ພາສາລາວ | | | | | | |
| ຜູ້ກ່ຽວຂ້ອງຈາກສາກົນ (ຜູ້ໃຫ້ທຶນ, ອົງການບໍ່ສັງກັດລັດ ແລະອື່ນໆ) | ພາສາອັງກິດ | • | | • | | • | |
| | ພາສາລາວ | | | | | | |

ຂ່າວສານຕົ້ນຕໍ ກໍໄດ້ເຜີຍແຜ່ ໃຫ້ສື່ຜ່ານໂຄສົກຂອງບໍລິສັດໄຟຟ້ານ້ຳເທີນ 2 ໂດຍໃຫ້ສຳພາດ ແລະລາຍງານໃຫ້ໜັງສືພິມ, ວິທະຍຸຫຼືໂທລະພາບ. ນອກນັ້ນ ກໍໄດ້ຮູ້ຈັກກັບສື່ມວນຊົນຕົ້ນຕໍ ແລະຈະໄດ້ປັບປຸງຢ່າງຕໍ່ເນື່ອງຂ່າວ ກ່ຽວກັບຄວາມຄືບໜ້າຂອງໂຄງການ. ໃນນີ້ມີ:

- ອົງການຂ່າວສາກົນ: ອົງການຂ່າວຝະລັ່ງ, ຣອຍເຕີ (ບາງກອກ) ;
- ຂ່າວໄທ: ບາງກອກປົດສ໌, ເນເຊິນ (ພາສາໄທ ແລະອັງກິດ);
- ອົງການຂ່າວລາວ: ຂ່າວສານປະເທດລາວ, ວຽງຈັນໄທມ໌;
- ວິທະຍຸ: ວິທະຍຸອາຊີເສຣີ, ສຽງອະເມລິກາ ; ແລະ
- ໂທລະພາບ: ບີບີຊີ, ໂທລະພາບຝະລັ່ງຊ່ອງ 5, ໂທລະພາບຍີ່ປຸ່ນ.

ວິດີໂອຍາວ 20ນາທີ ກ່ຽວກັບສະພາບລວມຂອງໂຄງການ (ມີດ້ານເຕັກນິກ, ສັງຄົມແລະສິ່ງແວດລ້ອມ) ກໍໄດ້ກະກຽມມາ ແລະ ຈະໄດ້ນຳໃຊ້ເພື່ອເປັນອັນສະໜັບສະໜູນພື້ນຖານ ໃຫ້ແກ່ການສະເໜີ

ທົ່ວໄປ ໃນສູນຂ່າວສານຂອງໂຄງການ. ວິດີໂອຍາວ 5 ນາທີ ແລະການສະເໜີດ້ານເຕັກນິກຕ່າງໆຫາກ ກໍໄດ້ສ້າງຂຶ້ນ ເພື່ອໃຊ້ໃນເວບໄຊຂອງໂຄງການ.

## ການແປເອກກະສານ

ຍ້ອນມີຜູ້ກ່ຽວຂ້ອງສາກົນ ແລະ ມາຈາກຫຼາຍໆພາກສ່ວນ ແລະລັກສະນະສະລັບສັບຊ້ອນຂອງໂຄງການ, ທຸກເອກກະສານກໍໄດ້ຮ່າງອອກມາໃນເບື້ອງຕົ້ນ ທົບທວນແລະປັບປຸງ ເປັນພາສາອັງກິດ. ຢ່າງໃດກໍດີ, ເມື່ອມີຜູ້ຮ່ວມງານຂອງລັດສາມາດເຮັດວຽກເປັນພາສາອັງກິດໄດ້ ກໍດີ, ພະນັກງານແລະໄທບ້ານສ່ວນຫຼາຍ ກໍບໍ່ສາມາດໃຊ້ພາສາອັງກິດໄດ້. ດັ່ງນັ້ນ, ການແປເອກກະສານສິ່ງແວດລ້ອມ ແລະ ສັງຄົມທັງໝົດ ແມ່ນມີຄວາມຈຳເປັນຫຼາຍສຳລັບຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ. ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມຫຼາຍໆສະບັບ ກໍໄດ້ແປເປັນພາສາລາວ, ສະບັບສຸດທ້າຍຄືສະບັບທີ 5 ແມ່ນໄດ້ຮ່າງຂຶ້ນໃນເດືອນຕຸລາ 2003. ຍ້ອນລັກສະນະເຕັກນິກຂອງເອກກະສານແລະຄສາມສາມາດ ຫຼື ເວລາຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ເພື່ອອ່ານເອກກະສານດັ່ງກ່າວຈຳກັດ, ຂະບວນການປຶກສາຫາລື ຈຶ່ງໄດ້ແປ ແຕ່ອັນຕົ້ນຕໍໃຫ້. ຕາຕະລາງ 5.7 ໄດ້ຍົກໃຫ້ເຫັນວ່າພາກໃດຂອງຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ໄດ້ເອົາມາແປ ເພື່ອໃຊ້ໃນການເຜີຍແຜ່ຂ່າວສານແລະການປຶກສາຫາລືໃນລະດັບທ້ອງຖິ່ນ, ລະດັບເຂດແລະຊາດ. ເອກກະສານທີ່ຕ້ອງໄດ້ແປເພື່ອເປີດເຜີຍຂໍ້ມູນໃນເວລາມີການປະເມີນໂຄງການ ມີບົດສະຫຼຸບສັງລວມ ການປະເມີນຜົນກະທົບດ້ານສິ່ງແວດລ້ອມແລະສັງຄົມ ແລະບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ (ເອກກະສານຫຼັກແລະເອກກະສານຂັດຕິດ).

ຕາຕະລາງ 5.7 ໝວດຕ່າງໆຂອງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມທີ່ໄດ້ແປເປັນພາສາລາວ

| | ໝວດ | ຂະໜາດຂອງການແປ |
|---|---|---|
| ເອກກະສານຫຼັກ | | ແປໝົດ |
| ເອກກະສານຊ້ອນທ້າຍ | | |
| A | ເອກກະສານອ້າງອີງ | ບໍ່ໄດ້ແປ |
| B | ຜູ້ປະກອບສ່ວນນຳ ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມແລະແຜນການຄຸ້ມຄອງສິ່ງແວດລ້ອມ | ແປໝົດ |
| C | ຂໍ້ມູນເຕັກນິກຕົ້ນຕໍຂອງໂຄງການ | ບໍ່ໄດ້ແປ |
| D | ຮູບແຕ້ມເຕັກນິກຂອງໂຄງສ້າງຂອງໂຄງການ | ບໍ່ໄດ້ແປ |
| E | ຂໍ້ມູນອຸທົກກະສາດ | ແປໝົດ |
| F | ການດຳເນີນງານຂອງເຂື່ອນທີ່ໄດ້ຄິດໄລ່ຮູບແບບ | ແປໝົດ |
| G | ການຄາດຕວງແບບ ຄຸນນະພາບຂອງນ້ຳ | ແປໝົດ |
| H | ປ່າໄມ້ແລະນົກ | ບໍ່ໄດ້ແປ |
| I | ການຄິດໄລ່ຄ່າຂອງຖິ່ນອາໄສ | ແປໝົດ |
| J | ສັກປ່າແລະນົກ | ບໍ່ໄດ້ແປ |
| K | ຂໍ້ບັງຄັບ ດ້ານສິ່ງແວດລ້ອມຂອງຜູ້ຮັບເໝົາກໍ່ສ້າງໃຫຍ່ | ບໍ່ໄດ້ແປ |
| L | ຂໍ້ບັງຄັບດ້ານສິ່ງແວດລ້ອມໃນສັນຍາກໍ່ສ້າງ | ແປໝົດ |
| M | ແຜນຄຸ້ມຄອງຢາປາບສັດຕູພືດ | ແປໝົດ |
| N | ເຫດການທີ່ມີການປຶກສາຫາລືແລະເຜີຍແຜ່ຂ່າວສານ | ແປໝົດ |
| O | ຄະນະຊ່ຽວຊານກັ່ນກອງດ້ານສິ່ງແວດລ້ອມແລະສັງຄົມ ແລະ ກຸ່ມທີ່ປຶກສາສາກົນ | ແປໝົດ |
| P | ຊັບພະຍາກອນວັດທະນະທຳທີ່ເປັນວັດຖຸ | ແປໝົດ |
| Q | ການປ່ອຍນ້ຳລົງຈາກເຂື່ອນ | ແປໝົດ |

## ການປຶກສາຫາລືໃນທ້ອງຖິ່ນ

ລາຍການປຶກສາຫາລື ໃນທ້ອງຖິ່ນສອງເທື່ອ ເພີ້ມ ຄືຢູ່ພູພຽງນາກາຍແລະເຊບັ້ງໄຟ ຈະໄດ້ຈັດຕັ້ງ ຂຶ້ນກ່ອນມີການປະເມີນໂຄງການ ແລະເທື່ອໜຶ່ງອີກ ກໍໄດ້ວາງແຜນ ຈະເຮັດກ່ອນມີການປະເມີນໂຄງ ການກັບປະຊາຊົນທີ່ໄດ້ຮັບຜົນກະທົບ ຈາກກໍ່ສ້າງ ໂຄງລ່າງໃນດິນຂອງໂຄງການ. ລາຍລະອຽດ ແມ່ນມີ ໃນແຜນພັດທະນາສັງຄົມ.

## ການປຶກສາຫາລືແລະເຜີຍແຜ່ຂ່າວສານກັບຜູ້ທີ່ຖືກຍົກຍ້າຍຢູ່ພູພຽງນາກາຍ

ຂະບວນການປຶກສາຫາລືໃນປີ 2004 ຢູ່ພູ ພຽງນາກາຍ ສຸມໃສ່ການສະເໜີໃຫ້ຜູ້ທີ່ໄດ້ຮັບຜົນ ກະທົບ ຈາກໂຄງການກ່ຽວກັບທາງເລືອກໃນການທໍາ ມາຫາກິນ ທີ່ເຂົາເຈົ້າອາດເລືອກເອົາ ແລະເພື່ອເຮັດ ໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ເລືອກເອົາທັງ ສອງຢ່າງ (i) ການທໍາມາຫາກິນ ແບບຫຼາຍອາຊີບ; ແລະ (ii) ສະຖານທີ່ຕັ້ງບ້ານ ທີ່ຈະຍົກຍ້າຍໄປຢູ່. ລາຍລະອຽດ ຂອງວຽກທີ່ໄດ້ເຮັດຢູ່ພູພຽງນາກາຍໃນ ປີ 2004 ແມ່ນມີໃນແຜນພັດທະນາສັງຄົມ. ມັນລວມ ເອົາ ການກະກຽມເຄື່ອງມືເພື່ອເຮັດການປຶກສາຫາລື, ວິທີຝຶກອົບຮົມຜູ້ດໍາເນີນການ, ຂ່າວສານ ຈະໄດ້ເຜີຍ ແຜ່ແນວໃດ ແລະ ຂະບວນຮັບເອົາຄໍາເຫັນຄືນ ແມ່ນມີແນວໃດ. ການຍົກບັນຫາຂອງປະຊາຊົນ ຈະ ພົວພັນແນວໃດກັບການວາງແຜນ, ທັງໝົດແມ່ນມີໃນ ແຜນພັດທະນາສັງຄົມ.

## ການປຶກສາຫາລືແລະເຜີຍແຜ່ຂ່າວສານຕາມແຄມເຊບັ້ງໄຟ

### *ໃນບ້ານຕ່າງໆ*

ໃນຊ່ວງເດືອນ 7 ຫາເດືອນ 9/04, ການ ປຶກສາຫາລືກັບປະຊາຊົນໃນບ້ານຕ່າງໆ ຕາມແຄມ ເຊບັ້ງໄຟໄດ້ສຸມໃສ່: (i) ສະເໜີໃຫ້ເຫັນວ່າໂຄງການ ຈະເຮັດໃຫ້ຄຸນນະພາບແລະປະລິມານນໍ້າ ເປັນແນວ ໃດ?; (ii) ຜົນກະທົບທີ່ຄາດວ່າຈະມີຕໍ່ກະແສນໍ້າ; (iii) ຜົນກະທົບທີ່ຄາດວ່າຈະມີຕໍ່ສັດນໍ້າ; ແລະ (iv) ຜົນກະທົບ ທີ່ຄາດວ່າຈະມີຕໍ່ຊີວິດການເປັນຢູ່ຂອງ ປະຊາຊົນ. ໃນນີ້ ໄດ້ສະເໜີໃຫ້ປະຊາຊົນທົບທວນ ຄືນແລະໃຫ້ຄໍາເຫັນເພື່ອແກ້ຜົນກະທົບເຫຼົ່ານັ້ນ. ຈາກ ນັ້ນ, ກໍໄດ້ສະເໜີຍຸດທະສາດວ່າຈະຕິດຕາມກວດກາ ຜົນກະທົບແລະຊົດເຊີຍຜົນກະທົບນັ້ນແນວໃດ ແລະ ໄດ້ສະເໜີໃຫ້ປະຊາຊົນມີຄໍາເຫັນວ່າຈະປັບປຸງຍຸດທະ ສາດນັ້ນແນວໃດ ແລະສຸດທ້າຍກໍຈະຈັດຕັ້ງປະຕິບັດ ມັນແນວໃດ?

ການປຶກສາຫາລືແລະເຜີຍແຜ່ຂ່າວສານ ໄດ້ ດໍາເນີນມາ ໃນປີ 2004 ເຖິງແມ່ນວ່າຜົນກະທົບຕໍ່ເຊ ບັ້ງໄຟ ຈະເກີດຂຶ້ນໃນ 5-6 ປີ ຕໍ່ໜ້າກໍຕາມ; ການ ປຶກສາຫາລື ເພື່ອປັບປຸງຍຸດທະສາດ, ຂະບວນການ ຊົດເຊີຍຄ່າເສຍຫາຍ ແລະຕິດຕາມກວດກາວຽກດັ່ງ ກ່າວ ຍັງຈະສືບຕໍ່ເຮັດອີກ. ລາຍລະອຽດເພີ້ມຕື່ມ ກໍ ສາມາດເບິ່ງໄດ້ ໃນແຜນພັດທະນາສັງຄົມ. ອັນນີ້ມີ ການກະກຽມເອກກະສານເພື່ອປຶກສາຫາລື, ການຝຶກ ອົບຮົມຜູ້ດໍາເນີນການ, ວິທີການເຜີຍແຜ່ແລະເກັບກໍາ ຂ່າວສານ ແລະການສັງລວມເອົາຄໍາເຫັນ ເຂົ້າໃນ ເອກກະສານ ກ່ອນຈະມີການປະເມີນໂຄງການ. ຄໍາ ເຫັນ ທີ່ປະຊາຊົນໄດ້ຍົກຂຶ້ນໃນການປຶກສາຫາລືຮອບ ນີ້ແລະການນໍາເອົາຄວາມສົນໃຈເຫຼົ່ານັ້ນ ເຂົ້າໃນການ ວາງແຜນ ກໍຍັງໄດ້ເອົາມາຖົກຖຽງກັນອີກດ້ວຍ.

## ການປຶກສາຫາລືກັບປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການແລະການເຜີຍແຜ່ຂ່າວສານ: ດິນຂອງໂຄງການ

ຮອບຕໍ່ໄປ ຂອງການປຶກສາຫາລືກັບປະຊາ ຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ ທີ່ພົວພັນກັບ ຜົນກະທົບຂອງດິນໂຄງການ ແມ່ນຈະຕ່າງກັນຢູ່ພູ ພຽງນາກາຍແລະເຊບັ້ງໄຟ. ອັນນີ້ກໍເພາະວ່າ:

i) ຜົນກະທົບ ຕໍ່ປະຊາຊົນຍ້ອນໂຄງການນັ້ນ ແມ່ນຮູ້ຄັກແນ່ ແລະ ມັນແມ່ນປະເພດດຽວເທົ່າ

ນັ້ນ ການເວນເອົາທີ່ດິນແລະຊັບສິນ ມາເປັນຂອງໂຄງການແບບຊົ່ວຄາວຫຼືຖາວອນ;

ii) ຜົນກະທົບເຫຼົ່ານີ້ ຈະໄດ້ມີການປະເມີນແລະຊົດເຊີຍ ໃນໄລຍະສັ້ນສົມຄວນ, ບໍ່ເຖິງ 1 ປີ ຖ້າແມ່ນທີ່ດິນແລະຊັບສິນແບບຖາວອນ ແລະອາດເຖິງສາມປີ ຖ້າຍອັນການນຳໃຊ້ທີ່ດິນແລະຊັບສິນແບບຊົ່ວຄາວ, ຫຼັງຈາກເວລານັ້ນ ຜູ້ທີ່ໄດ້ຮັບຜົນກະທົບຍ້ອນໂຄງການ ຈະບໍ່ເປັນຜູ້ທີ່ໄດ້ຮັບຜົນກະທົບອີກຕໍ່ໄປ;

iii) ໃນຫຼາຍກໍລະນີ, ອາດບໍ່ມີຄວາມຈຳເປັນທີ່ຕ້ອງຖືກຍົກຍ້າຍ; ແລະ

iv) ວຽກປຶກສາຫາລື ແລະເຜີຍແຜ່ຂ່າວສານສຳລັບວຽກໃນທີ່ດິນຂອງໂຄງການ ຈະໄດ້ດຳເນີນ ກັບຜູ້ທີ່ໄດ້ຮັບຜົນກະທົບເປັນກຸ່ມ ຍ້ອນໂຄງການເປັນແຕ່ລະກຸ່ມ. ໄລຍະເວລາ ແມ່ນຂຶ້ນກັບຄວາມຕ້ອງການ ຂອງຜູ້ຮັບເໝົາກໍ່ສ້າງທີ່ຢາກໄດ້ສິດສຳລັບທີ່ດິນໂຄງການປະເພດ 1 ແລະຢາກມີສິດໄດ້ນຳໃຊ້ເປັນຜູ້ທຳອິດ ຫຼື ທີ່ດິນປະເພດ 2.

ລາຍລະອຽດ ສຳລັບວຽກທີ່ຈະໄດ້ນຳເອົາຄືນໄປປຶກສາຫາລື ກ່ຽວກັບທີ່ດິນຂອງໂຄງການ ໃນປີ 2004 ສາມາດເບິ່ງໄດ້ຢູ່ແຜນພັດທະນາສັງຄົມ ຊຶ່ງລວມມີ ການເກັບກຳຂໍ້ມູນ, ການກະກຽມເອກກະສານ ເພື່ອປຶກສາຫາລື, ການຝຶກອົບຮົມຜູ້ດຳເນີນການ, ວິທີການເຜີຍແຜ່ຂ່າວສານ, ການຂຶ້ນທະບຽນທີ່ດິນແລະຊັບສິນ ແລະ ຂະບວນການຊົດເຊີຍ.

## ກອງປະຊຸມກັບຜູ້ມີສ່ວນຮ່ວມສາກົນ

ກອງປະຊຸມສາກົນ ໄດ້ດຳເນີນມາຫຼາຍຄັ້ງຢູ່ບາງກອກ, ໂຕກຽວ, ປາຣີ, ວໍຊິງຕັນແລະວຽງຈັນ ໃນຊ່ວງເດືອນ 8 ຫາເດືອນ 9 ປີ 2004. ຈຸດປະສົງຂອງກອງປະຊຸມສາກົນເຫຼົ່ານີ້ ແມ່ນເພື່ອໃຫ້ຜູ້ກ່ຽວຂ້ອງສາກົນ ຄືອົງການບໍ່ສັງກັດລັດ, ລັດຖະບານຕ່າງໆແລະຜູ້ໃຫ້ທຶນ ໄດ້ສະແດງຄຳເຫັນແລະຄວາມສົນໃຈ. ໄດ້ມີການສະເໜີສະເພາະກ່ຽວກັບຜົນກະທົບດ້ານສິ່ງແວດລ້ອມແລະສັງຄົມຂອງໂຄງການ, ການແກ້ໄຂບັນຫາແລະຂະບວນການປຶກສາຫາລື. ໄດ້ມີຄຳຖາມແລະຂໍ້ສະເໜີຈຳນວນໜຶ່ງ ໃນເວລາປຶກສາຫາລືດັ່ງກ່າວ. ຕາຕະລາງ 5.8 ໄດ້ສະຫຼຸບຄວາມສົນໃຈ ແລະບັນຫາທີ່ໄດ້ຍົກຂຶ້ນມາ ແລະຄຳຕອບທີ່ກ່ຽວຂ້ອງ. ການບັນທຶກແບບຄົບຊຸດ ຈາກກອງປະຊຸມສາກົນ ແມ່ນມີຢູ່ໃນບົດລາຍງານຂອງຜູ້ຮັບຜິດຊອບກອງປະຊຸມ ແລະການອອກຂ່າວກໍໄດ້ເຮັດສຳລັບແຕ່ລະກອງປະຊຸມ.

ບັນຫາສຳຄັນ ຈຳນວນໜຶ່ງກໍໄດ້ຍົກຂຶ້ນໃນໄລຍະມີການປຶກສາຫາລື ໃນກອງປະຊຸມແລະວຽກຕໍ່ໄປ ທີ່ຈະໄດ້ເຮັດເພື່ອປັບປຸງແຜນການແລະຂໍ້ລິເລີ້ມ.

- ຈັດຕັ້ງ ການໄປຢ້ຽມຢາມເຂດໂຄງການສຳລັບກຸ່ມທີ່ສົນໃຈ ມາຈາກໂຄງການປາກມູນ ເພື່ອໃຫ້ມີການປຶກສາຫາລືແບບເປີດເຜີຍ ແລະສຳພັດກັນ ລະຫວ່າງຜູ້ທີ່ໄດ້ຮັບຜົນກະທົບຈາກອີສານ ແລະຜູ້ທີ່ຈະໄດ້ຮັບຜົນກະທົບ ຈາກໂຄງການນໍ້າເທີນ 2. ຈຸດປະສົງ ແມ່ນເພື່ອແລກປ່ຽນຂ່າວສານ ແລະປັບປຸງແຜນຍົກຍ້າຍຈັດສັນປະຊາຊົນ;
- ດຳເນີນ ການສຶກສາກ່ຽວກັບຕະຫຼາດສິນຄ້າກະສິກຳ ໃຫ້ສຳເລັດແລະເລີ້ມເຮັດການສຶກສາເພີ້ມ ເພື່ອໃຫ້ມີຄວາມເຂົ້າໃຈເລິກເຊິ່ງ ກ່ຽວກັບຕະຫຼາດພືດທີ່ຂາຍໄດ້ໃນເຂດນັ້ນ ແລະຮັບປະກັນ ລາຍໄດ້ຂອງຜູ້ທີ່ຖືກຍົກຍ້າຍ;
- ຄວາມບໍ່ຖືກຕ້ອງ ຂອງຈຳນວນພົນລະເມືອງ, ຂະໜາດຂອງອ່າງເກັບນໍ້າ ແລະບັນຫາອື່ນໆ ໃນບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ, ແຜນພັດທະນາສັງຄົມ, ໂຄງຮ່າງແລະແຜນປະຕິບັດງານການຄຸ້ມຄອງສິ່ງແວດລ້ອມແລະສັງຄົມ 1 ແລະ ບົດສະຫຼຸບສັງລວມ ການປະເມີນຜົນກະທົບດ້ານສິ່ງແວດລ້ອມແລະສັງຄົມ ກໍຈະໄດ້ເອົາອອກ;
- ເຮັດການວິໃຈ ກ່ຽວກັບການປະມົງໃນອ່າງເກັບນໍ້ານາກາຍແລະເຊບັ້ງໄຟໃຫ້ແລ້ວ;
- ອອກດຳລັດ ທີ່ຈະຮັບປະກັນຈະແຈ້ງວ່າ ຊັບພະຍາກອນທີ່ດິນແລະປ່າໄມ້ ຢູ່ເຂດຍົກຍ້າຍຈັດສັນປະຊາຊົນແລະຊັບພະຍາກອນປາ ໃນອ່າງເກັບ

ນ້ຳ ແມ່ນເປັນສິດສະເພາະ ຂອງຜູ້ທີ່ຖືກຍົກຍ້າຍ ຢູ່ພູພຽງນາກາຍ ທີ່ຈະໄດ້ຊົມໃຊ້;

– ການສຳຫຼວດເພີ້ມ ກ່ຽວກັບທ່າແຮງທີ່ຈະລ້ຽງງົວ ແລະຄວາຍ ໃນເຂດຍົກຍ້າຍຈັດສັນແລະເຂດນ້ຳ ຂື້ນນ້ຳລົງ ຕາມແຄມອ່າງເກັບນ້ຳ.

ໂດຍລວມແລ້ວ, ກອງປະຊຸມດັ່ງກ່າວ ໄດ້ເຮັດໃຫ້ລັດຖະບານແລະບໍລິສັດໄຟຟ້ານ້ຳເທີນ 2 ໄດ້ເຮັດການປະເມີນດີຂຶ້ນ, ຄຳຄິດຄຳເຫັນໂດຍທົ່ວໄປຕໍ່ແຜນຂອງໂຄງການ ແລະ ລະດັບຂອງຄວາມກຽມພ້ອມ. ມັນຍັງມີຄວາມຈຳເປັນ ທີ່ຈະເຮັດການຕິດຕາມກວດກາຢ່າງຕໍ່ເນື່ອງ ໃນໄລຍະຈັດຕັ້ງປະຕິບັດໂຄງການ.

## ການເຜີຍແຜ່ຂ່າວສານ

### *ການເປີດເຜີຍຂ່າວສານ*

ຕະຫຼອດໄລຍະການວາງແຜນຂອງໂຄງການ, ບໍລິສັດໄຟຟ້ານ້ຳເທີນ 2 ສາມາດສະໜອງບົດລາຍງານແລະເອກກະສານໂຄງການ ທັງຢູ່ ສປປລາວ ແລະຢູ່ໄທ. ເວັບໄຊ ຂອງໂຄງການ (www.namtheun2. com) ຍັງໄດ້ເຜີຍແຜ່ຂ່າວສານໃນສາກົນ ແລະຍັງໄດ້ຮັບຄຳເຫັນຄືນຕໍ່ໂຄງການ. ມີຫຼາຍເອກກະສານ ທີ່ມີຂ່າວສະເພາະກ່ຽວກັບການເຂົ້າຮ່ວມຂອງມວນຊົນ; ໃນນີ້ມີ ເອກກະສານ ການສຶກສາທາງເລືອກ, ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ, ແຜນພັດທະນາສັງຄົມ ແລະ ໂຄງຮ່າງແລະແຜນປະຕິບັດງານການຄຸ້ມຄອງສິ່ງແວດລ້ອມແລະສັງຄົມ.

ຂະບວນການເຜີຍແຜ່ຂ່າວສານ ສຳລັບການສຶກສາທາງເລືອກ ແລະ ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ ແມ່ນມີດັ່ງລຸ່ມນີ້, ຂະບວນການເຜີຍແຜ່ຂ່າວສານ ສຳລັບ ແຜນພັດທະນາສັງຄົມ ແລະ ໂຄງຮ່າງແລະແຜນປະຕິບັດງານການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ກໍມີໃນເອກກະສານເຫຼົ່ານັ້ນເອງ.

### ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ

ແຕ່ປີ 1997, ການປຶກສາຫາລືກັບມວນຊົນ ແມ່ນໄດ້ເອົາເຂົ້າ ເປັນແຜນຂອງໂຄງການ. ອັນເຮັດໃຫ້ມີການເຂົ້າຮ່ວມຢ່າງຫ້າວຫັນ ແລະມີການສະແດງຄຳຄິດຄຳເຫັນອອກ ກ່ຽວກັບເລື້ອງສິ່ງແວດລ້ອມຂອງໂຄງການ ໃນລະດັບທ້ອງຖິ່ນ, ລະດັບພາກ, ລະດັບຊາດແລະສາກົນ. ມີກອງປະຊຸມທາງການສອງຄັ້ງ ຄືໃນເດືອນມີນາປີ 1997 ແລະເດືອນ ພະຈິກປີ 2000. ງານຊຸມໂປຊຽມໃນປີ 2002 ທີ່ວຽງຈັນ ແລະກອງປະຊຸມສາກົນຫຼາຍຄັ້ງ ໃນເດືອນກັນຍາ ປີ 2004. ຄຳເຫັນຈາກການປຶກສາຫາລືເຫຼົ່ານີ້ ແມ່ນໄດ້ເອົາເຂົ້າໃນເອກກະສານ ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງສິ່ງແວດລ້ອມ. ຕາຕະລາງ 5.9 ໄດ້ສະເໜີສະບັບຕ່າງໆຂອງ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ໃນໄລຍະຜ່ານມາ ແລະ ແຜນການໃນຕໍ່ໜ້າ.

### ການສຶກສາທາງເລືອກແລະຜົນກະທົບດ້ານເສດຖະກິດ

ການສຶກສາທາງເລືອກ ໄດ້ມີວິທີການເຂົ້າຮ່ວມ ຢ່າງຫຼວງຫຼາຍ ໃນການກຳນົດແລະຊັ່ງຊາບັນທັດຖານ ເພື່ອປະເມີນຄວາມເໝາະສົມຂອງທາງເລືອກຕ່າງໆ ຄືໄດ້ສະເໜີໃນພາກ 2. ການປຶກສາຫາລືກັບມວນຊົນ ຊຶ່ງເປັນສ່ວນໜຶ່ງຂອງທາງເລືອກກໍໄດ້ດຳເນີນມາ ໂດຍຈັດຕັ້ງກອງປະຊຸມສາມຄັ້ງ ຄືໃນເດືອນມັງກອນ, ເດືອນພຶດສະພາ ແລະ ເດືອນກໍລະກົດ ປີ 1997; ການສຶກສາທາງເລືອກ ຍັງໄດ້ນຳເອົາມາປຶກສາຫາລືກັນອີກຕື່ມ ໃນໄລຍະດຳເນີນກອງປະຊຸມສາກົນ ໃນເດືອນ 9/2004. ກອງປະຊຸມເຫຼົ່ານີ້ ໄດ້ເຕົ້າໂຮມເອົາອົງການບໍ່ສັງກັດລັດທີ່ຂຶ້ນທະບຽນທີ່ ສປປລາວ, ອົງການບໍ່ສັງກັດລັດສາກົນ, ພະນັກງານໃນທ້ອງຖິ່ນ, ເມືອງແລະສູນກາງ, ອົງ

ຕາຕະລາງ 5.8 ຄວາມສົນໃຈແລະບັນຫາທີ່ຍົກຂຶ້ນ ໃນກອງປະຊຸມສາກົນ ປີ 2004 (ຍັງບໍ່ໝົດ)

| ບັນຫາແລະຄວາມສົນໃຈ | ການຈັດຕັ້ງ | ຄຳຕອບ |
|---|---|---|
| ຜູ້ໃຫ້ທຶນແລະລັດຖະບານໄທ ໄດ້ໃຫ້ສັນຍາ ສຳລັບໂຄງການປາກອູຢູ່ອີສານ, ແຕ່ເຮັດບໍ່ໄດ້ ແລະຜູ້ທີ່ໄດ້ຮັບຜົນກະທົບ ກໍໄດ້ຮັບການຊົດເຊີຍ ບໍ່ເໝາະສົມ. ເປັນຫຍັງສະພາບ ຈຶ່ງຕ່າງໃນກໍລະນີໂຄງການນ້ຳເທີນ 2 ? | ອົງການເທຣາ, ປະເທດໄທ ແລະຜູ້ຕາງໜ້າກຸ່ມທີ່ສົນໃຈ ຈາກໂຄງການປາກມູນ | ຂະບວນການປຶກສາຫາລື ຂອງບໍລິສັດໄຟຟ້ານ້ຳເທີນ 2 ແມ່ນມີລັກສະນະຮອບດ້ານ ແລະໂປ່ງໃສ ແລະໄດ້ມີຜູ້ກ່ຽວຂ້ອງຕ່າງໆໄດ້ເຂົ້າຮ່ວມ. ໃນກໍລະນີຂອງໂຄງການນ້ຳເທີນ 2, ສັນຍາສຳປະທານ ກໍໄດ້ຜູກມັດບໍລິສັດໄຟຟ້ານ້ຳເທີນ 2 ໃຫ້ບັນລຸຄາດໝາຍຂອງລາຍໄດ້.<br><br>ລັດຖະບານ ສປປລາວ ໄດ້ເຊື້ອເຊີນຜູ້ຕາງໜ້າຜູ້ທີ່ໄດ້ຮັບຜົນກະທົບຂອງໄທ ຈາກໂຄງການປາກມູນມາຮ່ວມກອງປະຊຸມທີ່ວຽງຈັນແລະໄປຢ້ຽມຢາມເຂດໂຄງການ. |
| ຜົນກະທົບຕໍ່ການປະມົງ ອາດຍັງບໍ່ທັນໄດ້ສຶກສາເລິກເຊິ່ງ ໂດຍສະເພາະຢູ່ເຂດເຊບັ້ງໄຟຕອນລຸ່ມແລະສາຂາຂອງມັນ. | ອົງການເທຣາ ແລະຜູ້ຊ່ຽວຊານເອກກະລາດ, ປະເທດໄທ. | ການສຶກສາຜົນກະທົບ ຂອງໂຄງການແບບຮອບດ້ານຕໍ່ການປະມົງ ໄດ້ເຮັດມາແລ້ວ. ໂຄງການແມ່ນຕັດສິນໃຈ ທີ່ຈະຊົດເຊີຍຢ່າງເໝາະສົມແກ່ຜູ້ທີ່ໄດ້ຮັບຜົນກະທົບ ທີ່ຢູ່ຕາມແຕ່ລະຊ່ວງຂອງເຊບັ້ງໄຟ ລວມທັງຜູ້ທີ່ຢູ່ອາໄສຢູ່ໃກ້ເຊອີກດ້ວຍ ແລະຜູ້ທີ່ຢູ່ນຳການຫາປາຢູ່ເຊບັ້ງໄຟ. |
| ບໍ່ມີເວລາພໍ ເພື່ອອ່ານເອກກະສານ ກ່ອນຈະມີກອງປະຊຸມ | ອົງການ "ເພື່ອນຂອງ ໂລກ", ຍີ່ປຸ່ນ | ເອກກະສານ ແມ່ນໄດ້ເອົາອອກໃນເວບໄຊ ຂອງບໍລິສັດໄຟຟ້ານ້ຳເທີນ 2 ມາແຕ່ເດືອນ 5/04 ແລະ ສະບັບກ່ອນ ແມ່ນມີແຕ່ປີ 2002. ຍັງມີໂອກາດ ເພື່ອໃຫ້ຄຳເຫັນຕື່ມອີກໃນໄລຍະຂະບວນການປະເມີນໂຄງການ (ບໍລິສັດໄຟຟ້ານ້ຳເທີນ 2). |
| ການຕັດໄມ້ຢູ່ພູພຽງນາກາຍ ໄດ້ເຮັດໃຫ້ສິ່ງແວດລ້ອມຊຸດໂຊມລົງ ແລະແຕະຕ້ອງຕໍ່ຊີວິດການເປັນຢູ່ຂອງປະຊາຊົນຢູ່ນີ້ມາແຕ່ 1996 ພຸ້ນ, | ອົງການ 'ຕິດຕາມແມ່ນ້ຳຂອງ', ຍີ່ປຸ່ນ | ການຕັດໄມ້ໄດ້ດຳເນີນຢູ່ພູພຽງນາກາຍ ແຕ່ກາງຊຸມປີ 80 ແລະໄດ້ສະງັກໃນປີ 1999. ທະນາຄານໂລກ ໄດ້ກວດການມາສອງຄັ້ງແລ້ວກ່ຽວກັບສະພາບຂອງການຕັດໄມ້ຢູ່ພູພຽງນາກາຍແລະໄດ້ສະຫຼຸບວ່າ ບໍ່ໄດ້ມີການຕັດໄມ້ໃນເຂດປ່າຂອງບ້ານ ຫຼື ໃນປ່າສະຫງວນ (ບໍລິສັດໄຟຟ້ານ້ຳເທີນ 2 ແລະ ທະນາຄານໂລກ) |
| ຄວາມສົນໃຈກ່ຽວກັບແບບແຜນດຳລົງຊີວິດ.<br><br>1. ຜູ້ທີ່ຖືກຍົກຍ້າຍ ຈະສາມາດປູກເຂົ້າແນວໃດ?<br><br>2. ຕະຫຼາດພືດທີ່ເປັນສິນຄ້າ ຈະມີຢູ່ໃສ? | ສູນອາສາສະໝັກຍີ່ປຸ່ນ | 1. ຊາວບ້ານໄດ້ຕັດສິນໃຈ ທີ່ຈະຢູ່ພູພຽງນາກາຍແລະອັນນີ້ກໍມີຜົນສະທ້ອນ ຕໍ່ການທຳມາຫາກິນຂອງເຂົາເຈົ້າ. ຜູ້ທີ່ຖືກຍົກຍ້າຍໄດ້ |

| | | |
|---|---|---|
| 3. ບ່ອນລ້ຽງສັດ ຢູ່ບ່ອນໃດ? | | ສະເໜີຢາກປູກເຂົ້າ, ແຕ່ຄວາມສຳຄັນທາງດ້ານວັດທະນະທຳຂອງເຂົາເຈົ້າແລະການມີອາຫານກິນ ແມ່ນໄດ້ຮັບຮູ້ກັນແລ້ວ. ຢ່າງໃດກໍດີ, ໃນໄລຍະຍາວພືດທີ່ເປັນທາງເລືອກແລະປູກຢູ່ຕາມນາທີ່ມີນ້ຳຊຶມລະປະທານ ກໍຈະໄດ້ຂະຫຍາຍຕື່ມ (ບໍລິສັດໄຟຟ້ານ້ຳເທີນ 2).<br>2. ການສຶກສາໄດ້ດຳເນີນມາ ໃນປະຈຸບັນເພື່ອຊອກຫາພືດທີ່ຂາຍເອົາເງິນໄດ້ດີທີ່ສຸດ ຕາມຕະຫຼາດໃນທ້ອງຖິ່ນ (ບໍລິສັດໄຟຟ້ານ້ຳເທີນ 2).<br>3. ເຂດລ້ຽງສັດ ຈະລວມເອົາເຂດນ້ຳຂຶ້ນນ້ຳລົງແຄມອ່າງເກັບນ້ຳແລະເຂດທີ່ຍົກຍ້າຍຈັດສັນໄປຢູ່ (ບໍລິສັດໄຟຟ້ານ້ຳເທີນ 2). |
| ມູນຄ່າໂຄງການຍັງບໍ່ແຈ້ງແລະຂໍ້ມູນຍັງບໍ່ຖືກຄືດັ່ງສະເໜີໃນບົດລາຍງານ:<br>1. ເນື້ອທີ່ນ້ຳຖ້ວມບໍ່ແຈ້ງ (600 ຫຼື 450ອີງໃສ່ ບົດສະຫຼຸບສັງລວມການປະເມີນຜົນກະທົບ ດ້ານສິ່ງແວດລ້ອມແລະສັງຄົມ).<br>2. ຈຳນວນຄົນທີ່ຕ້ອງຍົກຍ້າຍ ຍັງບໍ່ແຈ້ງ (5.700-6.200ຄົນ), ຈຳນວນຄົນ ທີ່ໄດ້ຮັບຜົນກະທົບຢູ່ເຂດລຸ່ມ ຍັງບໍ່ແຈ້ງ (40.000-150.000ຄົນ).<br>3. ທາງເລືອກໃນການທຳມາຫາກິນ ຍັງບໍ່ທັນໄດ້ພິສູດຄັກແນ່ແລະອັນນີ້ຈະເປັນຄວາມສ່ຽງຫຼາຍສຳລັບແຜນການ.<br>4. ສະເໜີໃຫ້ເປີດເຜີຍໜົດສັນຍາຊື້ຂາຍໄຟຟ້າແລະສັນຍາສຳປະທານ ເພື່ອໃຫ້ມວນຊົນທົບທວນ. | ອົງການເພື່ອນຂອງໂລກ, ຝະລັ່ງ. | 1. ລະດັບນ້ຳເຕັມສຸດ (538ມ) ຈະເປັນ 450 ກມ². ເນື້ອທີ່ 650ກມ² ນັ້ນແມ່ນເນື້ອທີ່ໂຄງການທັງໝົດແລະຄວນເອົາອອກ (ບໍລິສັດໄຟຟ້ານ້ຳເທີນ 2).<br>2. ຈຳນວນຄົນທີ່ຕ້ອງຍົກຍ້າຍ ແມ່ນໄດ້ຄາດຄະເນ ໂດຍອີງໃສ່ການສຳຫຼວດພົນລະເມືອງແລະຈຳນວນທີ່ຄາດໄວ້ຕໍ່ໜ້າ. ໃນປັດຈຸບັນແມ່ນ 6200ຄົນ ຊຶ່ງຢູ່ໃນທີ່ດິນກໍ່ສ້າງໂຄງການ (ບໍລິສັດ ໄຟຟ້ານ້ຳເທີນ 2).<br>3. ທາງເລືອກໃນການທຳມາຫາກິນ ແມ່ນໄດ້ມີການພິສູດມາແລະພັດທະນາມາແຕ່ປີ 1996 ໃນຟາມສາທິດ ແລະຕໍ່ມາໃນບ້ານຕົວຢ່າງ (ບໍລິສັດ ໄຟຟ້ານ້ຳເທີນ 2).<br>4. ພາກທີ່ກ່ຽວຂ້ອງ ຂອງສັນຍາສຳປະທານ ແລະບົດສະຫຼຸບຫຍໍ້ ຂອງສັນຍາຊື້ຂາຍໄຟຟ້າ ໄດ້ໃຫ້ມວນຊົນແລ້ວ (ບໍລິສັດໄຟຟ້ານ້ຳເທີນ 2). |
| 1. ການສຶກສາ ທີ່ໄດ້ນຳໃຊ້ເພື່ອພັດທະນາທາງເລືອກ ສຳລັບການຫາປາຢູ່ເຊບັ້ງໄຟ ແລະ ໃນອ່າງເກັບນ້ຳ ມີຫຍັງແດ່?<br>2. ມີຫຍັງແດ່ ທີ່ພົວພັນກັບຄະນະກຳມາທິການໂລກ ສຳລັບເຂື່ອນ? | ອົງການກອງທຶນສັດປ່າໂລກ, ຝະລັ່ງ | 1. ບົດລາຍງານ (ບົດຮຽນ) ຈາກອ່າງນ້ຳງື່ມ ແລະອ່າງອຸບົນລັດ ໄດ້ເປັນພື້ນຖານເພື່ອວິໄຈການຫາປາໃນອ່າງເກັບນ້ຳ ຊຶ່ງມີໃນພາກ 24 ຂອງແຜນພັດທະນາສັງຄົມ. ການຫາປາຢູ່ເຊບັ້ງໄຟ ກຳລັງໄດ້ເອົາເຮັດການວິໄຈຢູ່ |

| | | |
|---|---|---|
| | | ແລະຈະສໍາເລັດກ່ອນ ມີການປະເມີນໂຄງການ (ບໍລິສັດໄຟຟ້ານໍ້າເທີນ 2).<br>2. ບົດລາຍງານ ຂອງຄະນະກໍາມາທິການໂລກສໍາລັບເຂື່ອນ ບໍ່ໄດ້ມີສະຖານະພາບທາງດ້ານກົດໝາຍ ແຕ່ກໍເປັນເອກກະສານ ທີ່ຖືວ່າເປັນປະໂຫຍດສໍາລັບຜູ້ໃຫ້ທຶນແລະນັກວາງແຜນພັດທະນາໄຟຟ້ານໍ້າຕົກ. ບົດຮຽນທີ່ໄດ້ມາແລະຄໍາແນະນໍາຕ່າງໆ ກໍໄດ້ເອົາໃຈໃສ່ໃນເວລາກວດເອກກະສານ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມຄືນ (ທະນາຄານໂລກ/ທະນາຄານພັດທະນາອາຊີ). |
| ບົດຮຽນການປະມົງໃນອ່າງນໍ້າງື່ມ ໄດ້ຊີ້ໃຫ້ເຫັນວ່າ ມັນມີຄວາມຈໍາເປັນ ທີ່ຕ້ອງຫ້າມຄົນນອກເຂົ້າມາຫາປານໍາ ເພື່ອຮັບປະກັນຜົນປະໂຫຍດຂອງປະຊາຊົນໃນທ້ອງຖິ່ນ; | ສູນຄົ້ນຄວ້າວິທະຍາສາດຝະລັ່ງ | ສະມາຄົມການປະມົງໃນອ່າງເກັບນໍ້າ ແມ່ນເພື່ອຮັບປະກັນ ໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບ ໄດ້ຮັບຜົນປະໂຫຍດຈາກອ່າງນັ້ນ. ການອອກດໍາລັດຈະໃຫ້ສິດພິເສດ ສະເພາະຜູ້ທີ່ໄດ້ຖືກຍົກຍ້າຍມາ (ບໍລິສັດໄຟຟ້ານໍ້າເທີນ 2) |
| ພະສົງ ຄວນເຂົ້າຮ່ວມໃນການພັດທະນາສັງຄົມທີ່ພູພຽງນາກາຍ | ສະມາຄົມເພື່ອປະເທດລາວ, ຝະລັ່ງ | ຈະໄດ້ມີ ຄວາມເອົາໃຈໃສ່ນໍາສາດສະໜາແລະວັດທະນະທໍາ ໃນໄລຍະມີການຍົກຍ້າຍຈັດສັນປະຊາຊົນ ແລະໃນນີ້ຈະມີການປັບປຸງວັດວາອາຮາມແລະສ້າງຂຶ້ນຢູ່ບ້ານໃໝ່ (ບໍລິສັດໄຟຟ້ານໍ້າເທີນ 2) |
| ຄວາມສົນໃຈກ່ຽວກັບຄວາມສ່ຽງທີ່ຈະມີການຕົກຕະກອນໃນອ່າງເກັບນໍ້າແລະຂີ້ຝຸ່ນທີ່ຈະປົວຢູ່ໃນເຂດນໍ້າຂຶ້ນນໍ້າລົງ | ອົງການແຟັງ-ອັງວິໂຣ, ປາຣີ | ການຕົກຕະກອນໃນອ່າງເກັບນໍ້າຄາດວ່າຈະມີໜ້ອຍເພາະໄດ້ປົກປັກຮັກສາປ່າໄມ້ຢູ່ອ່າງໂຕ່ງຕອນເທິງ. ເຂດນໍ້າຂຶ້ນນໍ້າລົງຄາດວ່າຈະກາຍເປັນເຂດທີ່ລ້ຽງສັດໃນລະດູແລ້ງ. |

ການໃຫ້ທຶນ, ສະຖາບັນການສຶກສາ, ສະຖານທູດແລະຜູ້ຕາງໜ້າຂະແໜງພະລັງງານ.

## ການມີບົດລາຍງານໃຫ້ມວນຊົນ

ໃນຊ່ວງເວລາຕ່າງໆ ໃນໄລຍະ ຈັດຕັ້ງປະຕິບັດໂຄງການ, ກຸ່ມໄຟຟ້ານໍ້າເທີນ 2 ໄດ້ເຮັດການແຈ້ງການ ໃຫ້ ປະຊາຊົນ ຮູ້ວ່າມີບົດລາຍງານຂອງໂຄງການ ໃນສູນຂ່າວ ສານ ຂອງກຸ່ມໄຟຟ້ານໍ້າເທີນ 2 ທີ່ວຽງຈັນ, ທ່າແຂກ ແລະ ນາກາຍ.

ຕົວຢ່າງ ເມື່ອຮ່າງບົດປະເມີນຜົນກະທົບແລະແຜນຄຸ້ມຄອງສິ່ງແວດລ້ອມ ສໍາເລັດໃນເດືອນພະຈິກປີ 2000, ໄດ້ມີການແຈ້ງການ ໃນໜັງສືພິມພາຍໃນ, ຕິດໃສ່ໃບແຈ້ງການໃນລະດັບແຂວງ ແລະເມືອງ ແລະໄດ້ເຊື້ອເຊີນໂດຍກົງ 200 ກວ່າຄົນເຂົ້າຮ່ວມ. 198 ຄົນໄດ້ເຂົ້າຮ່ວມ ກອງປະຊຸມລະດັບຊາດ ທີ່ວຽງຈັນ ຊຶ່ງໄດ້

ຕາຕະລາງ 5.9. ການເຜີຍແຜ່ຂ່າວສານຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ຜ່ານມາແລະໃນຕໍ່ໜ້າ

| ເດືອນ | ປີ | ສະບັບ | ເຜີຍແຜ່ | ປຶກສາຫາລື |
|---|---|---|---|---|
| 5 | 1997 | ຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມສະບັບທຳອິດ | ໄດ້ | ໄດ້ |
| 11 | 2000 | ຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສະບັບທີສອງ | ໄດ້ | ໄດ້ |
| 4 | 2001 | ຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສະບັບທີສາມ | ຕາມຂໍມາ | ບໍ່ |
| 3 | 2003 | ຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສະບັບທີສີ່ | ຕາມຂໍມາ | ບໍ່ |
| 10 | 2003 | ຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສະບັບທີຫ້າ | ຢາຍຈຳກັດ | ບໍ່ |
| 3 | 2004 | ຮ່າງບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສະບັບປັບປຸງ | ເຜີຍແຜ່ໃຫ້ມວນຊົນ | ໄດ້ |
| 10 | 2004 | ບົດປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະແຜນການຄຸ້ມຄອງສິ່ງແວດລ້ອມ ສົມບູນ | ເຜີຍແຜ່ຜ່ານສູນຂ່າວສານຂອງທະນາຄານໂລກ | ໄດ້ |

ເຜີຍແຜ່ຜົນ ຂອງບົດປະເມີນຜົນກະທົບ ແລະແຜນຄຸ້ມຄອງສິ່ງແວດລ້ອມ ໃຫ້ມວນຊົນ ທີ່ມີຜູ້ກ່ຽວຂ້ອງປະເພດຕ່າງໆ ເປັນຕົ້ນປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການ, ຜູ້ນຳຊຸມຊົນ, ສະຫະພັນ ແມ່ຍິງລາວ, ທະນາຄານໂລກ, ອົງການລັດ ແລະກຸ່ມທີ່ສົນໃຈອື່ນໆ. ໃນກອງປະຊຸມ ດັ່ງກ່າວ, ໄດ້ມີການສະແດງ ເຂດຍົກຍ້າຍຈັດສັນປະຊາຊົນ ຂອງ ໂຄງການແລະຟາມສົ່ງເສີມກະສິກຳ ເພື່ອໃຫ້ຄົນເຫັນໄດ້ລັກສະນະທີ່ກະຕຸກຊຸກຍູ້ຂອງການຮ່າງແລະການຈັດຕັ້ງປະຕິບັດ ແຜນພັດທະນາສັງຄົມ. ບົດລາຍງານຕົ້ນຕໍ ກໍມີຄືກັນ. ຫຼັງຈາກມີການສະເໜີແລ້ວ ກໍໄດ້ມີການປຶກສາຫາລືເປັນກຸ່ມ ແລະມີການຖາມການຕອບ ໂດຍມີນັກວິຊາການ ແລະຜູ້ຕາງໜ້າ ບໍລິສັດໄຟຟ້ານ້ຳເທີນ 2 ໃນແຕ່ລະຂັ້ນຕອນ ເພື່ອຊຸກຍູ້ໃຫ້ຜູ້ເຂົ້າຮ່ວມຊັກຖາມ.

## ການເຜີຍແຜ່ຂ່າວສານ ໃຫ້ມວນຊົນກ່ຽວກັບການຮັບຮອງເອົາໂຄງການ

ບໍລິສັດໄຟຟ້ານ້ຳເທີນ 2 ຈະດຳເນີນ:

- ໃນໄລຍະກໍ່ສ້າງ, ຜູ້ຮັບເໝົາກໍ່ສ້າງ ຈະເຜີຍແຜ່ຂ່າວສານ ກ່ຽວກັບຄວາມຄືບໜ້າໃນການກໍ່ສ້າງ ໃຫ້ຜູ້ທີ່ກ່ຽວຂ້ອງຮ່ວມກັບບໍລິສັດໄຟຟ້ານ້ຳເທີນ 2 ແລະອຳນາດການປົກຄອງທ້ອງຖິ່ນ;
- ກົນໄກແກ້ໄຂຂໍ້ຂັດແຍ່ງ ຈະໄດ້ສ້າງຂຶ້ນເພື່ອຮັບປະກັນວ່າ ບັນຫາທີ່ອາດເກີດຂຶ້ນນັ້ນໄດ້

ຖືກແກ້ໄຂທັນທີແລະໄດ້ດີ. ຂັ້ນຕອນດັ່ງກ່າວແມ່ນມີໃນແຜນພັດທະນາສັງຄົມ;

- ບົດລາຍງານການພົບເຫັນ ຂອງຄະນະຊ່ຽວຊານກັ່ນກອງດ້ານສິ່ງແວດລ້ອມ ແລະສັງຄົມ ຈະເຜີຍແຜ່ໃຫ້ມວນຊົນຮູ້; ແລະ
- ຕະຫຼອດ ການຈັດຕັ້ງປະຕິບັດໂຄງການ, ບໍລິສັດໄຟຟ້ານໍ້າເທີນ 2 ຈະໄດ້ໃຫ້ຂ່າວສານກ່ຽວກັບດ້ານຕ່າງໆ ຂອງການພັດທະນາໂຄງການ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ. ອັນນີ້ຈະແຈກຜ່ານສື່ຂ່າວທີ່ມີຢູ່ແລະທາງອື່ນໆ ເຊັ່ນຄະນະກໍາມະການຍົກຍ້າຍຈັດສັນປະຊາຊົນ, ຫ້ອງການຂອງໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ, ຄະນະກໍາມະການໄກ່ເກ່ຍຂອງໂຄງການ. ບໍລິສັດໄຟຟ້ານໍ້າເທີນ 2 ຈະສືບຕໍ່ບັນທຶກການປຶກສາຫາລືທີ່ໄດ້ຈັດມາ.

## *ເອົາຄໍາເຫັນຂອງຜູ້ທີ່ກ່ຽວຂ້ອງເຂົ້າໃນການອອກແບບ*

### ບັນຫາທີ່ຍົກຂຶ້ນ ໂດຍຜູ້ຊ່ຽວຊານເອກກະລາດ ແລະຄໍາຕອບຂອງໂຄງການ

ຂະບວນການປຶກສາຫາລື ແລະເຜີຍແຜ່ຂ່າວສານ ໄດ້ຮັບຜົນປະໂຫຍດຈາກຄໍາເຫັນແລະການທົບທວນທີ່ຕໍ່ເນື່ອງຈາກຜູ້ຊ່ຽວຊານສາກົນ. ການທົບທວນທີ່ຕໍ່ເນື່ອງຈາກຄະນະຊ່ຽວຊານກັ່ນກອງ ດ້ານສິ່ງແວດລ້ອມແລະສັງຄົມ ແລະຄະນະຊ່ຽວຊານດ້ານຄວາມປອດໄພຂອງເຂື່ອນ ໄດ້ປັບປຸງທິດທາງແລະຄຸນນະພາບ ຂອງການວາງແຜນແລະຕັດສິນໃຈ. ເອກກະສານຊ້ອນທ້າຍ O ໄດ້ສະເໜີກອບວຽກແລະຄວາມເປັນເອກກະລາດ ຂອງຜູ້ຊ່ຽວຊານສາກົນເຫຼົ່ານີ້ ແລະໄດ້ຍົກເຖິງຂໍ້ແນະນໍາຈໍານວນໜຶ່ງທີ່ໄດ້ໃຫ້ມາ.

### ອິດທິພົນຂອງການປຶກສາຫາລືກ່ຽວກັບການວາງແຜນໂຄງການ

ຄໍາເຫັນທີ່ຜູ້ກ່ຽວຂ້ອງໄດ້ໃຫ້ມາກໍໄດ້ລວມເຂົ້າແລະມີອິດທິພົນ ຕໍ່ການວາງແຜນແລະອອກແບບໂຄງການ. ຮູບຮ່າງ ຂອງແບບໂຄງການດັ່ງຕໍ່ໄປນີ້ສາມາດຖືວ່າເປັນຄໍາເຫັນ ມາຈາກການປຶກສາຫາລືກັບປະຊາຊົນ. ຕາຕະລາງ 5.10. ໄດ້ສະຫຼຸບອິດທິພົນຂອງຂະບວນເຂົ້າຮ່ວມຂອງມວນຊົນ ຕໍ່ການອອກແບບຂອງໂຄງການ:

- ສະຖານທີ່ ສ້າງໂຮງໄຟຟ້າແລະສະຖານີໝໍ້ແປ່ງໄດ້ມີການຍ້າຍໃໝ່ ເພື່ອບໍ່ໃຫ້ມີການຍົກຍ້າຍ ຈັດສັນປະຊາຊົນ ຈາກເຂດເກົ່າອອກໄປ;
- ຄອງລຸ່ມ ເຮັດໃຫ້ມີລາຍຈ່າຍເພີ້ມຫຼາຍ ແລະເປັນທາງເລືອກ ເພື່ອເອົານໍ້າລົງໃສ່ນໍ້າກະທ້າງ. ແບບຂອງຄອງລຸ່ມທີ່ອອກມານັ້ນ ຈະເຮັດໃຫ້ມີການຍົກຍ້າຍຈັດສັນປະຊາຊົນໜ້ອຍລົງ ແລະ ຫຼຸດຜ່ອນຜົນກະທົບທາງດ້ານສັງຄົມ ແລະເຮັດໃຫ້ທ່າແຮງທາງດ້ານພັດທະນາເພີ້ມຂຶ້ນ. ການຕັດແລວຄອງລຸ່ມລະອຽດ ໄດ້ອີງໃສ່ຜົນຂອງປຶກສາຫາລື ກັບປະຊາຊົນທີ່ໄດ້ຮັບຜົນກະທົບ ຈາກໂຄງການ. ຄອງລຸ່ມຈະໄດ້ປູຄອນຄະຣີດ ແລະຍົກລະດັບຂຶ້ນບາງສ່ວນໃຫ້ສູງກວ່າ ລະດັບໜ້າດິນທໍາມະຊາດ, ອັນເຮັດໃຫ້ລວງກວ້າງຂອງຄອງຈໍາກັດລົງ ແລະຕ້ອງການທີ່ດິນໜ້ອຍລົງ. ປະຕູປ່ອຍນໍ້າເຮັດຊົນລະປະທານ ຈາກຄອງລຸ່ມທີ່ໄດ້ຍົກລະດັບໃຫ້ສູງຂຶ້ນນັ້ນ ຈະຊ່ວຍໃຫ້ເຮັດນາແຊງແບບຖ່ວງໃນເຂດຍົມມະລາດໄດ້;
- ການກໍ່ສ້າງອ່າງດັດສົມ ຈະຊ່ວຍໃຫ້ມີການປ່ຽນແປງຂອງກະແສນໍ້າປະຈໍາວັນ ຫຼຸດລົງ, ອັນຈະເຮັດໃຫ້ການເສາະເຈື່ອນ ຂອງຕະຝັ່ງເຊບັ້ງໄຟໜ້ອຍລົງ;
- ການປ້ອງກັນຕະຝັ່ງເຈື່ອນ ຢູ່ປາກຂອງຄອງລຸ່ມຕົກໃສ່ເຊບັ້ງໄຟ ຈະສະກັດກັ້ນການເສາະເຈື່ອນ;

ຕາຕະລາງ 5.10 ຄວາມສົນໃຈຂອງຜູ້ມີສ່ວນຮ່ວມແລະອິດທິພົນຂອງການວາງແຜນ

| ຫົວເລື້ອງ | ຄວາມສົນໃຈຂອງຜູ້ມີສ່ວນຮ່ວມ | ອິດທິພົນຂອງການວາງແຜນ |
|---|---|---|
| ຜົນໄດ້ແກ່ສປປລາວ | ການຕັດໄມ້ຢູ່ປ່າສະຫງວນນາກາຍນ້ຳເທີນ | ໂຄງການ ຈະປະກອບສ່ວນ 31,5ລ້ານ ໂດລາໃຫ້ແກ່ການຄຸ້ມຄອງແລະອະນຸລັກປ່າສະຫງວນນາກາຍນ້ຳເທີນ ເພື່ອປົກປັກຮັກສາຊັບພະຍາກອນທຳມະຊາດ. |
| ຂະບວນປະເມີນຜົນກະທົບດ້ານສິ່ງແວດລ້ອມ | ຄວາມຄືບໜ້າໃນການພັດທະນາໂຄງການຊ້າ | ໂຄງການກຳລັງພັດທະນາໄປຕາມບົດແນະນຳຂອງທະນາຄານ ໂລກແລະ ທະນາຄານພັດທະນາອາຊີ, ແລະຈະໃຊ້ເວລາຫຼາຍແດ່. |
| ການເສາະເຈື່ອນ | ຜົນກະທົບຂອງການເສາະເຈື່ອນ ແລະກົນໄກຄວບຄຸມມັນຢູ່ຄອງລຸ່ມ | ສ່ວນໃຫຍ່ຂອງຄອງລຸ່ມ ຈະໄດ້ເຮັດດ້ວຍຊີມັງແລະປາກຄອງຕິກໃສ່ເຂບັ້ງໄຟ ຈະມີການປ້ອງກັນ ເພື່ອຫຼຸດຜ່ອນ ການເສາະເຈື່ອນ. |
| | ມັນອາດມີການຕົກຕະກອນໃນເຂດອ່າງເກັບນ້ຳ | ການວິໄຈກ່ຽວກັບການຕົກຕະກອນໄດ້ລະບຸວ່າ ໃນອັດຕາຂອງການເສາະເຈື່ອນ ໃນປັດຈຸບັນ, ຄວາມສາມາດກັກເກັບນ້ຳຂອງອ່າງເກັບນ້ຳ ຈະຫຼຸດໜ້ອຍທີ່ສຸດ. |
| ການປະມົງ | ຜົນກະທົບຕໍ່ຄອບຄົວທີ່ອາໄສຢູ່ເຂດລຸ່ມທີ່ອາໄສການຫາປາ | ການສຳຫຼວດຊັບພະຍາກອນສັດນ້ຳ ແລະ ເສດຖະກິດ-ສັງຄົມ ຈະຊີ້ບອກປະລິມານຂອງຄວາມເສຍຫາຍທີ່ເກີດຂຶ້ນກັບການທຳມາຫາກິນຂອງປະຊາຊົນ. ແຜນຊົດເຊີຍທີ່ມີລັກສະນະບຸກ ແມ່ນມີໃນຍຸດທະສາດເຊບັ້ງໄຟໃນແຜນພັດທະນາສັງຄົມ. |
| | ບົດຮຽນທີ່ໄດ້ຮັບມາຈາກໂຄງການທີ່ຄ້າຍຄືກັນທາງດ້ານຜົນສະທ້ອນຕໍ່ການຫາປາ | ບົດຮຽນຈາກໂຄງການເທີນ-ເທີນຫີນບູນ ໄດ້ນຳມາໃຊ້ເພື່ອວາງມາດຕະການຫຼຸດຜ່ອນຜົນກະທົບ ແລະຊົດເຊີຍຄ່າເສຍຫາຍຢູ່ເຂດເຊບັ້ງໄຟ. ບົດຮຽນຜ່ານມາໃນໂຄງການອື່ນ ກໍໄດ້ນຳມາໃຊ້ເພື່ອຄາດຄະເນການປະມົງໃນອ່າງເກັບນ້ຳ ໃນເວລາເຮັດການປະເມີນທາງເລືອກໃນການທຳມາຫາກິນຂອງຜູ້ທີ່ຖືກຍົກຍ້າຍ. |
| ນ້ຳຖ້ວມ | ນ້ຳຖ້ວມຫຼາຍຂຶ້ນຢູ່ເຊບັ້ງໄຟ ໃນລະດູຝົນແລະມີນ້ຳໜ້ອຍໃນລະດູແລ້ງ. | ໂຄງການຈະຫຼຸດຜ່ອນບັນຫານີ້ ແລະ ຈະຢຸດຜະລິດໄຟຟ້າເພື່ອປ້ອງກັນບໍ່ໃຫ້ເພີ້ມນ້ຳໃສ່ນ້ຳຖ້ວມລົ້ນຝັ່ງ. ໃນລະດູແລ້ງ, ນ້ຳຈະມີຫຼາຍສົມຄວນຢູ່ເຊບັ້ງໄຟ ເໝາະເພື່ອເຮັດຊົນລະປະທານ. |
| ທໍລະນີສາດ | ຜົນກະທົບຂອງອ່າງເກັບນ້ຳຕໍ່ທໍລະນີສາດ | ທໍລະນີສາດຂອງພູພຽງນາກາຍ ໄດ້ຮັບການປະເມີນມາແລ້ວແລະໄດ້ສະຫຼຸບວ່າ ມັນຈະບໍ່ມີຜົນກະທົບຫຍັງທາງດ້ານຄວາມໝັ້ນທານ ແລະ ຄວາມສາມາດກັກຂັງນ້ຳໄດ້. |
| ສຸກຂະພາບ | ຜົນກະທົບຕໍ່ສຸກຂະພາບໃນເວລາ | ໂຄງການ ຈະຈັດຕັ້ງປະຕິບັດສາມແຜນງານດ້ານສຸກຂະພາບ |

| | | |
|---|---|---|
| | ກໍ່ສ້າງ | (ລະດັບເຂດ, ສຳລັບຜູ້ທີ່ຖືກຍົກຍ້າຍແລະສຳລັບກຳມະກອນກໍ່ສ້າງ) ເພື່ອປັບປຸງໂຮງໝໍໃນທ້ອງຖິ່ນແລະສຶກສາມວນຊົນກ່ຽວກັບຄວາມສ່ຽງທາງດ້ານສຸກຂະພາບ. |
| ຖິ່ນອາໄສທຳມະຊາດ | ມີຫຼາຍບ່ອນເສຍຫາຍແລະໄດ້ຈາກໂຄງການ | ການສຶກສາກ່ຽວກັບຖິ່ນອາໄສທຳມະຊາດ ໄດ້ຄິດໄລ່ເນື້ອທີ່ແລະປະເພດຂອງຖິ່ນອາໄສ ທີ່ຈະສູນເສຍຫຼືອະນຸລັກໄວ້ຍ້ອນໂຄງການ. |
| ປ່າສະຫງວນ | ເຂດບ້ານທີ່ຍົກຍ້າຍມາຢູ່ໃໝ່ ຫຼືອ່າງເກັບນ້ຳທີ່ຢຶດເອົາເນື້ອທີ່ຂອງປ່າສະຫງວນນາກາຍ ນ້ຳເທີນ | ເຂດບ້ານທີ່ສະເໜີໃຫ້ຍົກຍ້າຍມາຢູ່ໃໝ່ ແມ່ນຢູ່ດ້ານໃຕ້ຂອງອ່າງເກັບນ້ຳ ແລະເຂດແດນຂອງປ່າສະຫງວນນາກາຍນ້ຳເທີນ ແມ່ນເອົາຕາມຂອບອ່າງເກັບນ້ຳແມ່ນຢູ່ລະດັບ 538ມ. ດັ່ງນັ້ນ ຈຶ່ງເຮັດໄດ້ວ່າທັງອ່າງເກັບນ້ຳແລະເຂດບ້ານທີ່ຍົກຍ້າຍໄປຢູ່ໃໝ່ນັ້ນ ບໍ່ໄດ້ມີຜົນກະທົບໂດຍກົງຕໍ່ປ່າສະຫງວນນາກາຍນ້ຳເທີນ. |
| ການປຶກສາຫາລືແລະເຜີຍແຜ່ຂ່າວ ສານ | ຊຸມຊົນເຂົ້າໃຈລັກສະນະຂອງຜົນກະທົບ | ຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ໄດ້ນຳໃຊ້ສື່ແລະພາສາຢ່າງເໝາະສົມ, ໂດຍຄຳນຶງເຖິງຄວາມຈຳເປັນຂອງກຸ່ມທີ່ປ່ຽນແປງງ່າຍຈາກຜົນກະທົບ ເຊັ່ນແມ່ຍິງແລະຊົນເຜົ່າ. |
| ຊັບພະຍາກອນວັດທະນະທຳທີ່ເປັນວັດຖຸ | ຜົນກະທົບຕໍ່ເຄື່ອງເກົ່າ, ສະຖານທີ່ວັດທະນະທຳແລະເຄື່ອງທັດຖະກຳ | ການສຳຫຼວດ ໄດ້ເຮັດມາສອງຄັ້ງແລ້ວເພື່ອຊອກຮູ້ວ່າມີຊັບພະຍາກອນວັດທະນະທຳຢູ່ໃນເຂດໂຄງການ. ການສຶກສາເພີ້ມ ແມ່ນກຳລັງເຮັດແລະຈະສຳເລັດໃນເດືອນ 8/2004. |
| ການສຶກສາທາງເລືອກ | ທາງເລືອກໃນການສະໜອງໄຟຟ້າຢູ່ໃນໄທ ຄວນຈະກຳນົດໃຫ້ລະອຽດ. | ການສຶກສາທາງເລືອກ ໄດ້ວິໄຈທາງເລືອກໃນການຜະລິດແລະຄວາມຕ້ອງການໄຟຟ້າຢູ່ປະເທດໄທ. ການສຶກສາໄດ້ສະຫຼຸບວ່າຄວາມຕ້ອງການ ແມ່ນຫຼາຍພໍຈະຮັບເອົາໄຟຟ້າ 3.300ເມກາວັດ ທີ່ລາວຈະສົ່ງອອກໃຫ້ແລະໂຄງການກໍສາມາດແຂ່ງຂັນໄດ້ຢ່າງສະບາຍ ກັບທາງເລືອກໃນການສະໜອງໄຟຟ້າທີ່ດີສຸດທີ່ໄທ. |
| | ຕ້ອງການໃຫ້ມີການສຶກສາທາງເລືອກ ເພື່ອການພັດທະນາໃນໄລຍະສັ້ນສຳລັບສປປລາວ. | ການສຶກສາທາງເລືອກ ໄດ້ວິໄຈໂຄງການອື່ນໆເພື່ອສົ່ງໄຟຟ້າຂອງ ສປປລາວ ອອກແລະໄດ້ລວມເອົາການຈັດອັນດັບຂອງໂຄງການທີ່ເປັນໜຶ່ງໃນສິບໂຄງການທີ່ດີສຸດ. |
| ການອອກແບບເຕັກນິກ | ຜົນກະທົບຈາກການຫຼຸດລົງຂອງກະແສນ້ຳຢູ່ຕອນລຸ່ມຂອງເຂື່ອນ. | ການສຶກສາກ່ຽວກັບການປ່ອຍນ້ຳລົງກ້ອງເຂື່ອນ ຈະຕີລາຄາຜົນກະທົບ ຈາກການຫຼຸດລົງຂອງກະແສນ້ຳປ່ອຍລົງກ້ອງເຂື່ອນແລະການປ່ອຍນ້ຳລົ້ນລົງ, ຈາກນັ້ນ ຈະໄດ້ເຮັດຂໍ້ສະເໜີກ່ຽວກັບທາງເລືອກ ໃນການຄຸ້ມຄອງກະແສນ້ຳແລະການປັບປຸງແລວນ້ຳ ເພື່ອຫຼຸດຜ່ອນຜົນກະທົບ. ບົດລາຍງານຄາດວ່າຈະສຳເລັດໃນເດືອນ 6/2004. |

| | | |
|---|---|---|
| | ຫຼຸດຜ່ອນການຍົກຍ້າຍຈັດສັນປະຊາຊົນແລະຊົດເຊີຍຢູ່ລຸ່ມໂຮງໄຟຟ້າ. | ຄອງລຸ່ມ ຈະໄດ້ສ້າງຂຶ້ນແທນທີ່ຈະປ່ອຍນ້ຳລົງນ້ຳກະທ້າງ, ອັນເຮັດໃຫ້ຈຳນວນຄອບຄົວ ທີ່ຈະຕ້ອງໄດ້ຮັບຜົນກະທົບຫຼຸດລົງ, ແຕ່ຍັງຈະໄດ້ສ້າງເງື່ອນໄຂໃຫ້ມີຊົນລະປະທານແບບຖ່ວງໄດ້. |
| | ຫຼຸດຜ່ອນການຍົກຍ້າຍຈັດສັນປະຊາຊົນແລະຊົດເຊີຍ ຢູ່ຕາມແຄມທາງໃໝ່ | ການກໍ່ສ້າງແລະຍົກລະດັບທາງ ຈະເຮັດຕາມແລວທາງທີ່ມີແລ້ວແລະຫຼີກບ້ານຄົນ. |
| | ຫຼຸດຜ່ອນການຍົກຍ້າຍຈັດສັນປະຊາຊົນແລະຊົດເຊີຍ ຈາກການປ່ອຍນ້ຳລົງແຕ່ໂຮງໄຟຟ້າ | ອ່າງດັດສົມນ້ຳ ຈະໄດ້ສ້າງຂຶ້ນເພື່ອຄວບຄຸມກະແສນ້ຳ ແລະຈາກນັ້ນ ຈະຫຼີກລ້ຽງຜົນກະທົບທີ່ບໍ່ຈຳເປັນຕາມ ແຄມເຊບັ້ງໄຟ. |
| ສາຍສົ່ງ | ຄວາມປອດໄພຕໍ່ເສົາໄຟແລະການຊົດເຊີຍຄ່າເສຍຫາຍຂອງເຮືອນແລະທົ່ງນາ. | ເສົາແມ່ນອອກແບບ ທີ່ຈະໃຫ້ມີຄວາມປອດໄພທີ່ສຸດ ແລະທົນທານໃນເວລາມີສະພາບອາກາດບໍ່ດີ. ການວິໄຈທົ່ງແມ່ເຫຼັກແລະທົ່ງໄຟຟ້າ ກໍໄດ້ເຮັດມາແລ້ວ. ການສຳຫຼວດພື້ນຖານ ຈະກຳນົດວ່າໃຜແດ່ຈະມີສິດໄດ້ຮັບການຊົດເຊີຍ. |
| ຄຸນນະພາບນ້ຳ | ປະໄມ້ໃນອ່າງອ່າງເກັບນ້ຳໄວ້ | ການແປຮູບຖ່າຍດາວທຽມ ແລະ ການສຳຫຼວດພາກສະໜາມທີ່ກຳລັງເຮັດຢູ່ໃນປັດຈຸບັນ ຈະປະເມີນຊີວະມວນສານໃນເຂດອ່າງເກັບນ້ຳ ແລະ ສະເໜີມາດຕະການເພື່ອເກັບກູ້ເອົາພືດທີ່ຍັງເຫຼືອຢູ່ອອກແນໃສ່ ປັບປຸງຄຸນນະພາບນ້ຳ. |
| | ຄຸນນະພາບນ້ຳຢູ່ລຸ່ມໂຮງໄຟຟ້າເພື່ອເອົາມາໃຊ້ໃນຄອບຄົວ. | ແຜນຕິດຕາມກວດກາ ຈະປະເມີນວ່າການປ່ຽນແປງໃດໜຶ່ງທີ່ບໍ່ດີຂອງຄຸນນະພາບນ້ຳໃຕ້ດິນ ແລະໜ້າດິນຈະແຕະຕ້ອງຕໍ່ສຸກຂະພາບຂອງຄົນຫຼືບໍ່. ບໍລິສັດໄຟຟ້ານ້ຳເທີນ 2 ຈະຫາແຫຼ່ງນ້ຳອື່ນມາໃຫ້ແຕ່ລະຄອບຄົວ, ໂດຍສະເພາະ ໃນບ້ານທີ່ໃຊ້ນ້ຳໜ້າດິນເປັນແຫຼ່ງນ້ຳໃຊ້ແລະນ້ຳດັ່ງກ່າວ ບໍ່ເໝາະທີ່ຈະເອົາມາໃຫ້ຄົນກິນ. |
| ສັດປ່າ | ຊະຕາກຳຂອງສັດທີ່ຫາຍາກ | ແຜນງານສັດປ່າຕ່າງໆ ກຳລັງສ້າງຂຶ້ນເພື່ອຕິດຕາມກວດກາ ແລະຮັກສາຊະນິດທີ່ຖືກໄພຂົ່ມຂູ່. ໂດຍສະເພາະແຜນງານຈະສຸມໃສ່ການປົກປັກຮັກສາສອງຊະນິດ ກ່ອນໝູ່ ໝົດແມ່ນຊ້າງແລະນົກເປັດດຳປີກຂາວ. |

– ການກໍ່ສ້າງໂຄງລ່າງ ເພື່ອເຮັດໃຫ້ອົກຊີ ເຂົ້າໃນນ້ຳ ລວມກັບອ່າງດັດສົມແລະຄອງລຸ່ມ ຈະຮັບປະກັນໃຫ້ຄຸນນະພາບຂອງນ້ຳນັ້ນດີຂຶ້ນ ໃນເຂດລຸ່ມ;

– ການປ່ອຍນ້ຳທີ່ຮັບປະກັນ ລົງຄອງລຸ່ມ ຈະຊ່ວຍເຮັດໃຫ້ປະຊາກອນປາຍືນຍົງ;

– ການຢຸດຜະລິດໄຟຟ້າ ກ່ອນນ້ຳທຳມະຊາດຈະລົ້ນຕະຝັ່ງເຊບັ້ງໄຟ ຈະຊ່ວຍບໍ່ໃຫ້ໂຄງການ ໄປເຮັດ

ໃຫ້ນ້ຳຖ້ວມເພີ້ມຂື້ນອີກ ທັງຖ້ວມສູງກວ່າແລະດຸກວ່າ.

## ອິດທິພົນຂອງການປຶກສາຫາລືກ່ຽວກັບການຍົກຍ້າຍຈັດສັນປະຊາຊົນ

ຄຳເຫັນ ຕໍ່ການເລືອກເອົາເຂດຕັ້ງບ້ານໃໝ່, ແບບແຜນທຳມາຫາກິນ, ແບບເຮືອນແລະໂຄງລ່າງອື່ນໆໄດ້ເກີດຂຶ້ນ ພາຍຫຼັງທີ່ໄດ້ພິຈາລະນາຢ່າງເລິກເຊິ່ງ ກ່ຽວກັບຊີວິດການເປັນຢູ່ທີ່ມີຢູ່ ແລະ ແບບທຳມາຫາກິນ ຂອງຜູ້ທີ່ໄດ້ຮັບຜົນກະທົບ. ບົດບາດຂອງຜູ້ທີ່ຖືກຍົກຍ້າຍ ໃນການເລືອກແລະກະກຽມບ່ອນ ທີ່ຈະຍົກຍ້າຍໄປຢູ່, ລັກສະນະຂອງບ້ານ, ແບບເຮືອນແລະການເຄື່ອນໄຫວຂອງບ້ານຕົວຢ່າງ ແມ່ນມີໃນແຜນພັດທະນາສັງຄົມ.

## ອິດທິພົນຂອງຂອງຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ

ຄືກັບການປຶກສາຫາລືກ່ຽວກັບແບບຂອງໂຄງການ, ການພັດທະນາຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ຈຶ່ງໄດ້ເປີດໃຫ້ທົບທວນແລະມີການປຶກສາຫາລື. ໃນປີ 1977, ໄດ້ເຮັດການທົບທວນການປຶກສາຫາລືກັບປະຊາຊົນ. ຟະລັງຄະລິນ (1997) ໄດ້ເຫັນ ຄວາມຈຳເປັນຂອງການປຶກສາຫາລືໃນທ້ອງຖິ່ນ, ໄດ້ທົບທວນການເຄື່ອນໄຫວຜ່ານມາ, ແລະຊອກເບິ່ງຊ່ອງຫວ່າງ ລະຫວ່າງການປຶກສາຫາລືທີ່ໄດ້ດຳເນີນມາກັບນະໂຍບາຍຕ່າງໆ ຂອງທະນາຄານໂລກ. ບົດສະຫຼຸບແລະການຈັດເອົາ ຂໍ້ແນະນຳເຂົ້າໃນຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ທີ່ດຳເນີນຢູ່ນີ້ແມ່ນມີໃນຕາຕະລາງ 5.11.

ໃນປີ 2002, ຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ໄດ້ເອີ້ນໃໝ່ວ່າການປຶກສາຫາລືແລະເຜີຍແຜ່ຂ່າວສານ ໂດຍເອົາອົງປະກອບຂອງການປຶກສາຫາລື ທີ່ມີໃນວຽກປຶກສາຫາລືແລະເຜີຍແຜ່ຂ່າວສານນັ້ນ ກວມເອົາການເຂົ້າຮ່ວມຂອງຜູ້ກ່ຽວຂ້ອງ.

## *ກົນໄກການຈັດຕັ້ງສຳລັບຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ*

ລັດຖະບານ ສປປລາວ ຈະສືບຕໍ່ມີບົດບາດນຳພາ ໃນຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ໂດຍແມ່ນບໍລິສັດໄຟຟ້ານ້ຳເທີນ 2 ເປັນຜູ້ໃຫ້ການສະໜັບສະໜູນທາງດ້ານເຕັກນິກ ແລະຄຸ້ມຄອງ ຕາມທີ່ຕ້ອງການ, ສ່ວນທະນາຄານໂລກແລະທະນາຄານພັດທະນາອາຊີ ຊ່ວຍໃນການຫາຜູ້ຊ່ຽວຊານ ໃນຂົງເຂດການປຶກສາຫາລືແບບມີສ່ວນຮ່ວມມາໃຫ້.

ກ່ຽວກັບການປຶກສາຫາລື ໃນລະດັບບ້ານ, ການປຶກສາຫາລືແຕ່ທົວທີ (ປະມານປີ 1997) ໄດ້ມີໜ່ວຍງານຄຸ້ມຄອງ ການຍົກຍ້າຍຈັດສັນປະຊາຊົນເປັນຜູ້ນຳພາ. ໃນເຂດລຸ່ມ, ແລະຍ້ອນມີຫຼາຍບ້ານ, ລັດຖະບານ ສປປລາວ ໄດ້ສ້າງທີມງານຂຶ້ນ ຊຶ່ງປະກອບດ້ວຍ ກຸ່ມປະຕິບັດງານຍົກຍ້າຍຈັດສັນປະຊາຊົນ ເພື່ອໄປຢ້ຽມຢາມແຕ່ລະບ້ານເພື່ອດຳເນີນປຶກສາຫາລືກັບເຂົາເຈົ້າ. ທີມງານເຫຼົ່ານີ້ ໄດ້ຮັບການຝຶກອົບຮົມດ້ານການປະເມີນຊົນນະບົດແບບມີສ່ວນຮ່ວມຈາກຊ່ຽວຊານ ທີ່ກຸ່ມບໍລິສັດໄຟຟ້ານ້ຳເທີນ 2 ວ່າຈ້າງມາ.

ໄລຍະສອງຂອງການປຶກສາຫາລື, ຍ້ອນເລີ້ມໃນຕົ້ນປີ 2004, ຈະແມ່ນ ລັດຖະບານ ສປປລາວ ເປັນຜູ້ນຳອີກ, ຊຶ່ງຈະຈັດຕັ້ງຫ້ອງການປຶກສາຫາລືກັບປະຊາຊົນຂຶ້ນເອງ. ສຳລັບປຶກສາຫາລືແລະເຜີຍແຜ່ຂ່າວສານໃນລະດັບບ້ານ, ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ ຈະສ້າງໜ່ວຍງານກ່ຽວຂ້ອງຂຶ້ນ. ໜ່ວຍງານດັ່ງກ່າວ ຈະຄຸ້ມຄອງຂະບວນການປຶກສາຫາລືແລະເຜີຍແຜ່ຂ່າວສານ ແລະ ຊ່ວຍພະນັກງານເມືອງ ໃຫ້ປະກອບທີມງານຂຶ້ນມາເຮັດວຽກໃນບ້ານ. ຕາມທີ່ຕ້ອງການ, ໜ່ວຍງານດັ່ງກ່າວ ຍັງຈະຮັບປະກັນວ່າ ມີການຊ່ວຍເຫຼືອທາງດ້ານເຕັກນິກໃນເລື້ອງທີ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ສົນໃຈ, ເຊັ່ນ ການທຳມາຫາກິນໃນຊົນນະບົດ, ການຮັກສາສຸກຂະພາບແລະການພັດທະນາຊຸມຊົນ.

ຕາຕະລາງ 5.11. ການທົບທວນຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ໂດຍພະລັງຄະລົນ (1997)

| ບັນຫາທີ່ຍົກຂຶ້ນ | ອັນທີ່ໄດ້ລວມເຂົ້າໃນການພັດທະນາໂຄງການ |
|---|---|
| ສະເໜີໃຫ້ມີນັກສັງຄົມສາດອາວຸໂສມາເຮັດວຽກເຕັມເວລາສໍາລັບການວາງແຜນແລະຄຸ້ມຄອງຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ. | ແຕ່ທົບທວນມາ, ກໍມີຜູ້ຊ່ຽວຊານທາງດ້ານສັງຄົມໄດ້ເຂົ້າຮ່ວມໃນການຝຶກອົບຮົມທີມ ຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ, ສ້າງແຜນຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ແລະຄຸ້ມຄອງການຈັດຕັ້ງປະຕິບັດ. ເມື່ອຮັບຮອງເອົາໂຄງການເພື່ອໃຫ້ທຶນ/ເວລາປິດການລົງທຶນ, ກໍຈະມີການແຕ່ງຕັ້ງແລະສືບຕໍ່ປຶກສາຫາລືກັນເປັນຈຸເພື່ອໃຫ້ມີຜູ້ຕາງໜ້າພາກສ່ວນຕ່າງໆເຂົ້າຮ່ວມ. |
| | ຢູ່ພູພຽງ, ຜູ້ຕາງໜ້າຄະນະກໍາມະການຍົກຍ້າຍຈັດສັນປະຊາຊົນບ້ານ ຈະໄດ້ສ້າງຂຶ້ນເພື່ອປະສານການເຄື່ອນໄຫວຂອງບ້ານແລະສືບຕໍ່ພິຈາລະນາໃນບ້ານແລະເອົາເຂົ້າໃນແຜນດໍາເນີນງານຍົກຍ້າຍຈັດສັນປະຊາຊົນ. ໃນຂົງເຂດຜົນກະທົບອື່ນ, ແຜນປຶກສາຫາລືໄດ້ລວມເອົາປຶກສາຫາລືຂອງກຸ່ມທີ່ເປັນເປົ້າໝາຍ ແລະສໍາພາດໄທບ້ານສ່ວນບຸກຄົນເພື່ອຊອກຫາຜູ້ຮັບຜິດຊອບວຽກດັ່ງກ່າວ. ເຕັກນິກຂອງຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ໄດ້ຂະຫຍາຍຕື່ມເພື່ອລວມເອົາປຶກສາຫາລືເປັນກຸ່ມນ້ອຍແລະການສໍາພາດຊຶ່ງຮັບປະກັນໃຫ້ມີຜູ້ຕາງໜ້າເພດ, ເຜົ່າແລະລຸ້ນຄົນ. |
| ທີມງານຂອງຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ຄວນເປັນຕົວແທນໃຫ້ແກ່ເຜົ່າແລະເພດຂອງປະຊາຊົນທີ່ມີສ່ວນຮ່ວມ. | ທີມງານຂອງຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ໄດ້ລວມເອົາເຜົ່າ (ບະຣູ, ລາວກະເລີງ, ຜູ້ໄທແລະກຸ່ມອື່ນໆ) ແລະກຸ່ມແມ່ຍິງ. |
| ຂ່າວສານແລະຄູ່ມືຕ້ອງໄດ້ສ້າງຂຶ້ນສະເພາະສໍາລັບແຕ່ລະກຸ່ມເປົ້າໝາຍທີ່ມາຮ່ວມປະຊຸມ. | ການວາງແຜນໄດ້ຜະລິດຄູ່ມືທີ່ສຸມໃສ່ຜູ້ມີສ່ວນກ່ຽວຂ້ອງຕ່າງໆ, ໂດຍສະເພາະປົດສະເຕີ, ຮູບ, ຮູບເສັ້ນ, ຮູບແຕ້ມ, ວິດີໂອ ແລະອື່ນໆທີ່ໄດ້ຄໍານຶງເຖິງລະບົບການສຶກສາ. |
| ທີມຂະບວນການປຶກສາຫາລືແລະເຂົ້າຮ່ວມຂອງປະຊາຊົນ ຕ້ອງໄດ້ຮັບການສຶກສາຕື່ມ | ການຝຶກອົບຮົມໃນເຕັກນິກການເຂົ້າຮ່ວມໄດ້ດໍາເນີນໃນປີ 1997 ແລະ 1998. ການຝຶກອົບຮົມເພີ່ມກໍໄດ້ສະເໜີໃຫ້ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນແລະອື່ນໆທີ່ກ່ຽວຂ້ອງໃນຂະບວນການຍົກຍ້າຍຈັດສັນປະຊາຊົນ. |

ບໍລິສັດໄຟຟ້ານໍ້າເທີນ 2 ກໍຈະປະກອບທີມງານ ສໍາລັບການປຶກສາຫາລືໃນລະດັບຊາດແລະພາກພື້ນ, ເພື່ອພົວພັນສະໜັບສະໜູນແລະເມື່ອຈໍາເປັນ ກໍເຮັດການຝຶກອົບຮົມແລະໃຫ້ການຊ່ວຍເຫຼືອແກ່ໜ່ວຍງານຮັບຜິດຊອບ ການປຶກສາຫາລືແລະເຜີຍແຜ່ຂ່າວສານຂອງ ລັດຖະບານ ສປປລາວ. ພະນັກງານຮັບຜິດຊອບ ການປຶກສາຫາລືແລະເຜີຍແຜ່ຂ່າວສານຂອງບໍລິສັດໄຟຟ້ານໍ້າເທີນ 2 ຈະຊອກເບິ່ງຊ່ອງຫວ່າງ ໃນຂະບວນການແລະສະເໜີມາດຕະການເພື່ອປັບປຸງຂໍ້ຂາດຕົກບົກພ່ອງ. ເຂົາເຈົ້າ ຈະດໍາເນີນກອງ

ປະຊຸມ ເພື່ອທົບທວນແລະປັບປຸງຄວາມສາມາດຂອງພະນັກງານທ້ອງຖິ່ນ ກ່ຽວກັບການປຶກສາຫາລືແລະເຜີຍແຜ່ຂ່າວສານ ແລະ ຊ່ວຍທີມ ທີ່ປະຈຳຢູ່ພາກສະໜາມ ເພື່ອວາງຍຸດທະສາດແລະວິທີເຮັດວຽກ. ເຂົາເຈົ້າ ຈະຊ່ວຍໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ ໃນການຄຸ້ມຄອງຂະບວນການທັງໝົດ.

ບົດບາດອັນຕົ້ນຕໍທີ່ສຸດ ຂອງບໍລິສັດໄຟຟ້ານໍ້າເທີນ 2 ຈະແມ່ນປະສານງານແລະຮັບປະກັນວ່າ ໜ່ວຍງານຮັບຜິດຊອບ ການປຶກສາຫາລືແລະເຜີຍແຜ່ຂ່າວສານ ຈະວາງແຜນຊຸດຮຽນໃຫ້ ເພື່ອຮັບປະກັນວ່າພະນັກງານຂອງລັດ ມີຄວາມສາມາດປຶກສາຫາລືໄດ້ຄົບຖ້ວນກ່ຽວກັບໂຄງການ, ທີມຮັບຜິດຊອບການປຶກສາຫາລືແລະເຜີຍແຜ່ຂ່າວສານ ຂອງບໍລິສັດໄຟຟ້ານໍ້າເທີນ 2 ຈະຮັບຜິດຊອບຕົ້ນຕໍ, ໂດຍຮ່ວມມືກັບ ໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນປະຊາຊົນ, ໃນການຜະລິດປຶດສະເຕີ, ແຜນທີ່, ຮູບພາບແລະການແປເອກກະສານ, ຄູ່ມືແລະອຸປະກອນແລະເຄື່ອງມືອື່ນໆ ເພື່ອຮັບໃຊ້ປຶກສາຫາລື.

ໂດຍບໍ່ກ່ຽວຂ້ອງກັບກົນໄກການຈັດຕັ້ງທີ່ກ່າວມາເທິງນັ້ນ ຄວາມຮັບຜິດຊອບໃນປະຈຸບັນແລະເນື້ອໃນສະເພາະ ສຳລັບການປຶກສາຫາລືແລະເຜີຍແຜ່ຂ່າວສານແມ່ນຂຶ້ນກັບເວລາແລະເປົ້າໝາຍຂອງຜູ້ເຂົ້າຮ່ວມ.